# ***<u>ແຜນສ້າງປະຊາຄົມເສດຖະກິດອາຊຽນ</u>***

## I. <u>ຄວາມເປັນມາ</u>:

1. ຜູ້ນຳອາຊຽນໄດ້ຕົກລົງກັນທີ່ ***ກົວລາລຳເປີ*** ໃນເດືອນ ***12*** ປີ ***1997*** ຈະພ້ອມກັນປະຕິຮູບອາຊຽນ ໃຫ້ເປັນພາກພື້ນທີ່ໝັ້ນຄົງ, ອຸດົມຮັ່ງມີ ແລະ ສາມາດ ແຂ່ງຂັນໄດ້ສູງ, ພຽບພ້ອມໄປດ້ວຍການພັດທະນາທາງດ້ານເສດຖະກິດ ຢ່າງ ເທົ່າທຽມກັນ, ຫຼຸດຜ່ອນຄວາມທຸກຈົນ ແລະ ຄວາມແຕກຕ່າງກັນທາງດ້ານ ເສດຖະກິດ-ສັງຄົມ (ວິໄສທັດຂອງອາຊຽນໃນປີ 2020).

2. ໃນກອງປະຊຸມສຸດຍອດຜູ້ນຳອາຊຽນ ທີ່ ***ບາຫຼີ*** ເດືອນ ***10*** ປີ ***2003*** ຜູ້ນຳອາຊຽນໄດ້ປະກາດວ່າ ປະຊາຄົມເສດຖະກິດອາຊຽນ ***(AEC)*** ຈະເປັນເປົ້າໝາຍແຫ່ງການເຊື່ອມໂຍງດ້ານເສດຖະກິດພາກພື້ນ ໃນປີ ***2020*** **(ຖະແຫລງການ ບາຫຼີ ຄັ້ງທີ II)**. ນອກຈາກ AEC ແລ້ວ, ປະຊາຄົມຄວາມໝັ້ນຄົງອາຊຽນ ແລະ ປະຊາຄົມວັດທະນະທຳ-ສັງຄົມອາຊຽນ ແມ່ນເປັນ 2 ເສົາຄ້ຳຫຼັກທີ່ສຳຄັນຂອງປະຊາຄົມອາຊຽນໃນອານາຄົດ. 3 ເສົາຄ້ຳຫຼັກດັ່ງກ່າວນີ້ ຄາດວ່າຈະເຮັດວຽກ ຄຽງບ່າຄຽງໄລ່ກັນ ເພື່ອສ້າງຕັ້ງປະຊາຄົມອາຊຽນ ໃນປີ 2020.

3. ໃນເວລາຕໍ່ມາ, ກອງປະຊຸມລັດຖະມົນຕີເສດຖະກິດອາຊຽນ ທີ່ຈັດຂຶ້ນໃນ ເດືອນ ***8*** ປີ ***2006*** ທີ່ ***ກົວລາລຳເປ***ີ ປະເທດ ***ມາເລເຊຍ*** ກໍ່ໄດ້ເຫັນດີໃນການ ພັດທະນາ ***"ແຜນງານໜຶ່ງດຽວທີ່ສອດຄ່ອງ"*** ເພື່ອໃຫ້ AEC ຄືບໜ້າໂດຍໄວ ໂດຍໄດ້ລະບຸລັກສະນະສະເພາະ ແລະ ອົງປະກອບພື້ນຖານຂອງ AEC ພາຍ ໃນປີ 2015 ທີ່ສອດຄ່ອງກັບຖະແຫລງການບາຫຼີ II ທີ່ມີເປົ້າໝາຍທີ່ເດັ່ນຊັດ ແລະ ກຳນົດຕາຕະລາງເວລາຂອງການປະຕິບັດ ມາດຕະການຕ່າງໆແບບໃຫ້

ມີການໂຍະຍານແກ່ກັນ ດັ່ງທີ່ໄດ້ຕົກລົງກັນກ່ອນແລ້ວ ເພື່ອຮອງຮັບຜົນປະ ໂຫຍດໃຫ້ແກ່ບັນດາປະເທດສະມາຊິກອາຊຽນ.

4. ໃນກອງປະຊຸມສຸດຍອດອາຊຽນຄັ້ງທີ 12, ເດືອນ ***01*** ປີ ***2007*** ບັນດາຜູ້ນຳອາຊຽນໄດ້ຢືນຢັນຢ່າງເຂັ້ມແຂງ ເຖິງພັນທະທີ່ຈະເລັ່ງສ້າງຕັ້ງປະຊາຄົມອາ ຊຽນໃນປີ ***2015*** ຕາມທີ່ໄດ້ຄາດໄວ້ໃນວິໄສທັດອາຊຽນ 2020 ແລະ ຖະແຫລງການອາຊຽນຄັ້ງທີ II ແລະ ໄດ້ລົງນາມໃນຖະແຫລງການ ເຊບູ ວ່າດ້ວຍການສ້າງຕັ້ງປະຊາຄົມອາຊຽນໃນປີ 2015, ໂດຍສະເພາະແລ້ວ ບັນດາຜູ້ນຳອາຊຽນໄດ້ເຫັນດີ ທີ່ຈະເລັ່ງການສ້າງຕັ້ງປະຊາຄົມເສດຖະກິດອາຊຽນ ໃຫ້ສຳ ເລັດໃນປີ ***2015*** ແລະ ປະຕິຮູບອາຊຽນໃຫ້ກາຍເປັນພາກພື້ນ ທີ່ມີການເຄື່ອນຍ້າຍຢ່າງເສລີດ້ານສິນຄ້າ, ການບໍລິການ, ການລົງທຶນ, ແຮງງານທີ່ຊຳນານງານ ແລະ ການໄຫລວຽນຂອງທຶນ ຢ່າງເປັນອິດສະຫຼະ.

## II. <u>ລັກສະນະສະເພາະ ແລະ ອົງປະກອບຂອງ AEC</u> :

5. ***AEC*** ແມ່ນຜົນສຳເລັດສຸດທ້າຍຂອງການເຊື່ອມໂຍງທາງດ້ານເສດຖະກິດ ຕາມນະໂຍບາຍ ແລະ ວິໄສທັດອາຊຽນໃນປີ 2020 ບົນພື້ນຖານແຫ່ງຄວາມສອດຄ່ອງກັນທາງດ້ານຜົນປະໂຫຍດຂອງບັນດາປະເທດສະມາຊິກອາຊຽນ, ໃຫ້ມີການເຊື່ອມໂຍງກັນທາງດ້ານເສດຖະກິດຢ່າງເລິກເຊິ່ງ ແລະ ກ້ວາງຂວາງ ໂດຍຜ່ານການປະຕິບັດຂໍ້ລິເລີ່ມທັງທີ່ມີແລ້ວ ແລະ ຂໍ້ລິເລີ່ມໃໝ່ ໂດຍກຳນົດໄລຍະເວລາຢ່າງຈະແຈ້ງ. ໃນການສ້າງຕັ້ງ ***AEC***, ອາຊຽນຈະຕ້ອງເຂັ້ມງວດໃນການປະຕິບັດຫຼັກການຕ່າງໆ, ຊຶ່ງລວມທັງການປະຕິບັດເປີດກ້ວາງ, ປະຕິ ບັດຕໍ່ພາຍນອກ ແລະ ຫຼັກການດ້ານເສດຖະກິດຕະຫຼາດ ຊຶ່ງລວມທັງຂໍ້ກຳນົດຂອງການຄ້າຫຼາຍຝ່າຍ ແລະ ຍຶດໝັ້ນຂໍ້ກຳນົດພື້ນຖານຕ່າງໆ ໃຫ້ໄດ້ຮັບຜົນດີ ເພື່ອເປັນຂໍ້ຜູກພັນໃນການສົ່ງເສີມເສດຖະກິດ.

6. ***AEC*** ຈະສ້າງໃຫ້ອາຊຽນເປັນຕະຫຼາດ ແລະ ຖານການຜະລິດໜຶ່ງດຽວ ຊຶ່ງຈະເຮັດໃຫ້ອາຊຽນມີຄວາມຄ່ອງແຄ້ວໃນການແຂ່ງຂັນດ້ວຍກົນໄກ ແລະ ມາດຕະການໃໝ່ຕ່າງໆ ເພື່ອໃຫ້ການຈັດຕັ້ງປະຕິບັດຂໍ້ລິເລີ່ມຕ່າງໆ ທີ່ຍັງຄົງຄ້າງໃຫ້ເຂັ້ມແຂງ, ຊຶ່ງຈະເຮັດໃຫ້ການເຊື່ອມໂຍງທາງເສດຖະກິດ ໃນຂະແໜງການທີ່ເປັນບູລິມະສິດ ໄວຂຶ້ນ, ສົ່ງເສີມການເຄື່ອນໄຫວໃຫ້ແກ່ນັກທຸລະກິດ, ສີມືແຮງງານ, ແລະ ຜູ້ມີພອນສະຫວັນ, ໃຫ້ກົນໄກສະຖາບັນຂອງອາຊຽນ ເຂັ້ມ ແຂງ ໃນບາດກ້າວທຳອິດເພື່ອກ້າວໄປເຖິງການບັນລຸປະຊາຄົມເສດຖະກິດອາ ຊຽນ, ອາຊຽນໄດ້ຈັດຕັ້ງປະຕິບັດຄຳສະເໜີແນະຂອງຄະນະສະເພາະກິດລະດັບສູງທາງດ້ານເສດຖະກິດ ***(HLTF)*** ໃນການເຊື່ອມໂຍງທາງດ້ານເສດຖະກິດອາຊຽນ ທີ່ໄດ້ລະບຸໃນຖະແຫຼງການ ທີ່ ບາຫລີ.

7. ໃນເວລາດຽວກັນນັ້ນ, ***AEC*** ຈະຕ້ອງໄດ້ແກ້ໄຂຄວາມແຕກໂຕນທາງດ້ານການພັດທະນາ ແລະ ເລັ່ງໃຫ້ການເຊື່ອມໂຍງຂອງບັນດາປະເທດ ລາວ, ກຳປູ ເຈຍ, ພະມ້າ ແລະ ຫວຽດນາມ (CLMV) ໂດຍຜ່ານການປະຕິບັດຂໍ້ລິເລີ່ມ ຂອງການເຊື່ອມໂຍງກັນກັບອາຊຽນ ແລະ ຂໍ້ລິເລີ່ມອື່ນຂອງພາກພື້ນ, ແລະ ການຮ່ວມມືກັນກັບຂົງເຂດອື່ນໆ ກໍ່ສາມາດເຊື່ອມໂຍງເຂົ້າກັນ ເຊັ່ນ: ການພັດທະນາຊັບພະຍາກອນມະນຸດ ແລະ ເສີມສ້າງຄວາມອາດສາມາດ, ການຮັບຮູ້ເຖິງຄຸນວຸດທິ ແລະ ການປຶກສາຫາລືກັນຢ່າງໃກ້ຊິດ ທາງດ້ານເສດຖະກິດມະ ຫາພາກ ແລະ ນະໂຍບາຍທາງການເງິນ, ມາດຕະການຊຳລະດ້ານການຄ້າ, ຍົກລະດັບໂຄງສ້າງພື້ນຖານ ແລະ ການເຊື່ອມໂຍງການສື່ສານ, ພັດທະນາການບໍລິຫານທາງດ້ານອີເລັກໂທຼນິກ ຜ່ານລະບົບ e-ASEAN, ການເຊື່ອມໂຍງກັນທາງດ້ານອຸດສາຫະກຳທົ່ວພາກພື້ນ ເພື່ອສົ່ງເສີມອຸດສາຫະກຳພາກ ພື້ນ ແລະ ສົ່ງເສີມຂະແໜງການເອກະຊົນໃຫ້ມີສ່ວນຮ່ວມເພື່ອການສ້າງຕັ້ງ AEC.

8. ບົນພື້ນຖານຂ້າງເທິງນີ້ ແລະ ໂດຍພິຈາລະນາເຖິງຄວາມສໍາຄັນ ກ່ຽວກັບການຄ້າກັບພາຍນອກຂອງອາຊຽນ ແລະ ຄວາມຈໍາເປັນຂອງປະຊາຄົມອາຊຽນໂດຍລວມ ທີ່ຈະດໍາເນີນນະໂຍບາຍມຸ້ງສູ່ພາຍນອກ, AEC ໄດ້ສັນນິຖານກ່ຽວກັບລັກສະນະພິເສດຄື: (ກ) ສ້າງຕະຫຼາດ ແລະ ຖານການຜະລິດອັນ ດຽວ, (ຂ) ເປັນພາກພື້ນທີ່ສາມາດແຂ່ງຂັນສູງດ້ານເສດຖະກິດ, (ຄ) ພັດທະນາເສດຖະກິດພາກພື້ນຢ່າງທົ່ວເຖິງ, (ງ) ເຮັດໃຫ້ພາກພື້ນມີການເຊື່ອມໂຍງກັນຢ່າງເຕັມທີ່ກັບເສດຖະກິດໂລກ. ລັກສະນະພິເສດເຫຼົ່ານີ້ ແມ່ນຕິດພັນ ແລະ ຊ່ວຍຊູຍູ້ໜູນຊຶ່ງກັນ ແລະ ກັນ. ສ່ວນປະກອບຂອງອົງປະກອບຕ່າງໆ ຂອງແຕ່ລະຄຸນລັກສະນະພິເສດຂອງແຜນງານດັ່ງກ່າວ ຈະຮັບປະກັນໄດ້ ຊຶ່ງຄວາມ ສອດຄ່ອງ ແລະ ກິມກຽວຂອງອົງປະກອບເຫຼົ່ານີ້ ຕະຫຼອດທັງການຈັດຕັ້ງປະຕິ ບັດ ແລະ ການປະສານສົມທົບອັນແທ້ຈິງ ລະຫວ່າງບັນດາຜູ້ທີ່ມີສ່ວນກ່ຽວ ຂ້ອງ.

**ກ.** **<u>ຕະຫຼາດ ແລະ ຖານການຜະລິດໜຶ່ງດຽວ</u>:**

**9**. ເປັນຕະຫຼາດ ແລະ ຖານການຜະລິດໜຶ່ງດຽວຂອງອາຊຽນແມ່ນ ປະກອບ ດ້ວຍ 5 ອົງປະກອບຫຼັກ ຄື: (1) ການໄຫຼວຽນຢ່າງເສລີຂອງສິນຄ້າ, (2) ການໄຫຼວຽນຢ່າງເສລີດ້ານການບໍລິການ, (3) ການໄຫຼວຽນຢ່າງເສລີດ້ານການລົງ ທຶນ, (4) ການໄຫຼວຽນຢ່າງເສລີຂອງທຶນທີ່ສະດວກຂຶ້ນ, (5) ການເຄື່ອນໄຫວຢ່າງເສລີຂອງແຮງງານທີ່ມີສີມື. ນອກນັ້ນ, ຕະຫຼາດ ແລະ ຖານການຜະລິດໜຶ່ງດຽວຍັງລວມເຖິງການມີສ່ວນປະກອບອີກ 2 ຢ່າງທີ່ສໍາຄັນ ຄື: ການເຊື່ອມໂຍງຂະແໜງບູລິມະສິດ ແລະ ສະບຽງອາຫານ, ການກະສິກໍາ ແລະ ປ່າໄມ້.

ກ.1. <u>ການໄຫຼວຽນຢ່າງເສລີຂອງສິນຄ້າ:</u>

10. ການໄຫຼວຽນຢ່າງເສລີຂອງສິນຄ້າແມ່ນຖືເປັນແກນກາງຊຶ່ງແນໃສ່ເຮັດໃຫ້ ຕະຫຼາດ ແລະ ຖານການຜະລິດໜຶ່ງດຽວ ໄດ້ຮັບຜົນລຳເລັດ. ຕະຫຼາດດຽວສຳ ລັບສິນຄ້າ (ແລະການບໍລິການ) ຈະອຳນວຍຄວາມສະດວກໃຫ້ກັບການພັດທະນາທາງດ້ານເຄືອຂ່າຍການຜະລິດໃນພາກພື້ນ ແລະ ຍົກລະດັບຄວາມສາມາດຂອງອາຊຽນ ໃຫ້ເປັນສູນກາງການຜະລິດຂອງສາກົນ ຫຼື ເປັນສ່ວນໜຶ່ງໃນຕ່ອງໂສ້ການສະໜອງສິນຄ້າຂອງໂລກ.

11. ໂດຍຜ່ານເຂດການຄ້າເສລີອາຊຽນ ***(AFTA)***, ອາຊຽນໄດ້ບັນລຸເປົ້າໝາຍທີ່ສຳຄັນໃນການລຶບລ້າງພາສີ. ແຕ່ເຖິງຢ່າງໃດກໍ່ຕາມ, ການໄຫຼວຽນຂອງສິນຄ້າບໍ່ຈຳເປັນຕ້ອງຮຽກຮ້ອງໃຫ້ອັດຕາພາສີເທົ່າກັບສູນ ແຕ່ການລຶບລ້າງສິ່ງກີດຂວາງທີ່ບໍ່ແມ່ນພາສີ ແມ່ນຖືວ່າສຳຄັນອີກດ້ວຍ. ອີກດ້ານໜຶ່ງ, ເພື່ອເປັນການເພີ່ມອົງປະກອບຫຼັກອື່ນໆ ໃນການອຳນວຍຄວາມສະດວກ ໃຫ້ແກ່ການໄຫຼວຽນຂອງສິນຄ້າ ແມ່ນມາດຕາການອຳນວຍຄວາມສະດວກທາງດ້ານການຄ້າ ເຊັ່ນ: ການເຊື່ອມໂຍງກັນທາງດ້ານຂະບວນການພາສີ, ຈັດຕັ້ງລະບົບກວດກາທີ່ປະຕູດຽວຢ່າງຕໍ່ເນື່ອງ ທີ່ເສີມສ້າງໃຫ້ແກ່ລະບຽບການກ່ຽວກັບແຫຼ່ງກຳເນີດສິນຄ້າຕາມແຜນ ***CEPT*** ແລະ ລວມທັງລະບຽບການຢັ້ງຢືນທາງປະຕິບັດການ ແລະ ໃຫ້ລະບຽບການກ່ຽວກັບມາດຖານ ແລະຄວາມສອດຄ່ອງກົມກຽວກັນ.

12. ຂໍ້ຕົກລົງວ່າດ້ວຍອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນສ ັສບເຂດການ ຄ້າເສລີ ***ASEAN (CEPT - AFTA)*** ຈະຖືກທົບທວນຄືນ ແລະ ປັບປຸງໃຫ້ສົມບູນ ໃຫ້ກາຍເປັນຂໍ້ຕົກລົງທີ່ມີລັກສະນະກວມລວມ ເພື່ອໃຫ້ບັນລຸຊຶ່ງການ ໄຫຼວຽນຢ່າງເສລີຂອງສິນຄ້າ ແລະ ໃຊ້ໄດ້ຕາມຄວາມຕ້ອງການຂອງອາຊຽນ ເພື່ອເລັ່ງລັດການເຊື່ອມໂຍງກັນທາງດ້ານເສດຖະກິດໃນປີ ***2015***.

13. ການລຶບລ້າງພາສີ: ອັດຕາພາສີຂອງສິນຄ້າພາຍໃນອາຊຽນ ຈະຖືກລຶບລ້າງຕາມຕາຕະລາງເວລາ ແລະ ບັນດາຂໍ້ຜູກພັນທີ່ກໍານົດໄວ້ຢູ່ໃນສັນຍາ ທີ່ໄດ້ຕົກລົງເຫັນດີນໍາກັນໃນ CEPT- AFTA ແລະ ຕາມສັນຍາອື່ນໆ ທີ່ກ່ຽວຂ້ອງ.

__ພາກການປະຕິບັດ:__

- ລຶບລ້າງພາສີນໍາເຂົ້າສໍາລັບສິນຄ້າຜະລິດຕະພັນທັງໝົດ, ຍົກເວັ້ນລາຍການສິນຄ້າທີ່ຫາກໍ່ຍົກຍ້າຍມາຈາກສິນຄ້າກະທົບໄວ, ແລະກະທົບໄວ ສູງໃນປີ ***2010*** ສໍາລັບ ***ASEAN-6***, ແລະໃນປີ ***2015***, ສໍາລັບປະເທດ ***CLMV*** ໂດຍໃຫ້ມີການຜ່ອນສັ້ນຜ່ອນຍາວສໍາລັບລາຍການສິນຄ້າກະ
ທົບໄວບາງອັນໃນໄລຍະປີ ***2018***, ອີງຕາມຂໍ້ຕົກລົງ ***CEPT*** ທີ່ກໍານົດໄວ້ແລ້ວ ກ່ຽວກັບແຜນການລຶບລ້າງພາສີການນໍາເຂົ້າ.
- ລຶບລ້າງພາສີນໍາເຂົ້າຜະລິດຕະພັນ ທີ່ນອນຢູ່ໃນບັນຊີຂະແໜງບູລິມະ ສິດ ***PIS*** ໃນປີ ***2007*** ສໍາລັບ ***ASEAN-6*** ແລະ ປີ ***2012*** ສໍາລັບບັນດາປະເທດ ***CLMV*** ຕາມຂໍ້ບັນຍັດຂອງຂໍ້ຕົກລົງກອບຂອງອາຊຽນ (ສະບັບທີ່ດັດແກ້ຄືນໃໝ່) ວ່າດ້ວຍແຜນການເຊື່ອມໂຍງຂອງຂະແໜງບູລິມະສິດ.
- ສໍາເລັດໃນການຍົກຍ້າຍລາຍການຜະລິດຕະພັນທີ່ເຫຼືອຄ້າງຢູ່ໃນບັນຊີ
ລາຍການສິນຄ້າກະທົບໄວ ***(SL)*** ເຂົ້າມາຢູ່ໃນແຜນ ***CEPT*** ແລະ ຫຼຸດຜ່ອນອັດຕາພາສີຂອງຜະລິດຕະພັນດັ່ງກ່າວໃຫ້ຢູ່ໃນລະດັບ ***0-5%*** ໃນ ວັນທີ ***01*** ເດືອນ ***01*** ປີ ***2010*** ສໍາລັບ***ອາຊຽນ-6***, ໃນວັນທີ ***01*** ເດືອນ ***01*** ປີ ***2013*** ສໍາລັບ***ຫວຽດນາມ***, ໃນວັນທີ ***01*** ເດືອນ ***01*** ປີ ***2015*** ສໍາລັບ***ສປປລາວ*** ແລະ ***ມຽນມ້າ***, ແລະ ໃນວັນທີ ***01*** ເດືອນ ***01*** ປີ ***2017*** ສໍາລັບ***ກໍາປູເຈຍ*** ຕາມຂໍ້ບັນຍັດຂອງອະນຸສັນຍາກ່ຽວກັບມາດ
ຕະການພິເສດຕໍ່ກັບຜະລິດຕະພັນ ທີ່ກະທົບໄວ ແລະ ກະທົບສູງ.

- ຍົກຍ້າຍລາຍການຜະລິດຕະພັນ ທີ່ຢູ່ໃນບັນຊີຍົກເວັ້ນໂດຍຖາວອນ ຈາກການຫຼຸດອັດຕາພາສີຈໍານວນໜຶ່ງ ໂດຍໃຫ້ສອດຄ່ອງກັບຂໍ້ຕົກລົງ *CEPT.*

**14.** ການລົບລ້າງສິ່ງກີດກັ້ນອື່ນໆທີ່ບໍ່ແມ່ນພາສີ. ອາຊຽນໄດ້ມີຄວາມຄືບໜ້າ ຢ່າງສໍາຄັນ ໃນການປ່ອຍໃຫ້ອັດຕາພາສີແບບເສລີ. ຈຸດສຸມທີ່ສໍາຄັນຂອງອາ ຊຽນໃນປີ ***2015*** ແມ່ນຈະໄດ້ລົບລ້າງສິ່ງທີ່ກີດກັ້ນອື່ນໆ ທີ່ບໍ່ແມ່ນພາສີ ***(NTBs)*** ຫຼື ອຸປະສັກທາງດ້ານການຄ້າໃຫ້ໄດ້ຢ່າງເຕັມສ່ວນ.

**<u>ພາກການປະຕິບັດ</u>:**

- ເພີ່ມທະວີຄວາມໂປ່ງໃສ ໂດຍຍຶດຖືເອົາຕາມອະນຸສັນຍາກ່ຽວກັບຂັ້ນ ຕອນຂອງການແຈ້ງສະພາບການ ແລະ ສ້າງຕັ້ງກົນໄກການຕິດຕາມ ຢ່າງມີປະສິດທິຜົນ.
- ຍຶດຖືຕາມຂໍ້ຜູກພັນທີ່ມີຢູ່ພ້ອມລະບຽບການທີ່ຈະຮັກສາໄວ້ ແລະ ພິຈາ ລະນາຄືນ ມາດຕະການສິ່ງທີ່ກີດກັ້ນທາງການຄ້າທີ່ບໍ່ແມ່ນພາສີ.
- ລົບລ້າງສິ່ງກີດກັ້ນທາງການຄ້າທັງໝົດທີ່ບໍ່ແມ່ນພາສີໃນປີ ***2010*** ສໍາ ລັບ ***ອາຊຽນ 5***, ສໍາລັບ ***ຟີລິບປິນ***ໃນປີ ***2012***, ແລະ ປີ ***2015*** ສໍາລັບ ***CLMV*** ໂດຍມີການຜ່ອນສັ້ນຜ່ອນຍາວຮອດປີ ***2018***, ໂດຍປະຕິບັດ ຕາມຂໍ້ຕົກລົງທີ່ ເຫັນດີນໍາກັນໃນແຜນປະຕິບັດງານການລົບລ້າງສິ່ງທີ່ ກີດກັ້ນທາງການຄ້າທີ່ບໍ່ ແມ່ນພາສີ ***(NTBs)***.
- ເພີ່ມທະວີຄວາມໂປ່ງໃສ ດ້ານມາດຕະການໆຄ້າທີ່ບໍ່ແມ່ນພາສີ, ແລະ
- ສືບຕໍ່ດໍາເນີນການອັນແນໃສ່ເຮັດໃຫ້ລະບຽບການຕ່າງໆ ທີ່ມີໃນພາກ ພື້ນ ສອດຄ່ອງກັບລະບຽບການ ແລະ ການປະຕິບັດທີ່ດີເລີດຂອງສາ ກົນ.

**15.** ລະບຽບການວ່າດ້ວຍແຫຼ່ງກຳເນີດສິນຄ້າ ***(Rules of Origin= ROO)***: ການວາງລະບຽບກ່ຽວກັບແຫຼ່ງກຳເນີດສິນຄ້າ ແມ່ນເພື່ອຕອບສະໜອງໃຫ້ກັບການປ່ຽນແປງຂອງຂະບວນການຜະລິດໃນພາກພື້ນ ທັງນີ້ເພື່ອອຳນວຍຄວາມສະດວກແກ່ການຄ້າ ແລະ ການລົງທຶນໃນບັນດາປະເທດສະມາຊິກອາຊຽນ, ສົ່ງເສີມເຄືອຂ່າຍການຜະລິດພາກພື້ນ, ສົ່ງເສີມການພັດທະນາ ***SMEs*** ແລະ ເຮັດໃຫ້ຊ່ອງຫ່ວາງຂອງການພັດທະນາແຄບລົງ, ສົ່ງເສີມການນຳໃຊ້ແຜນງານ ***CEPT-AFTA***.

<u>**ພາກການປະຕິບັດ:**</u>

- ສືບຕໍ່ປະຕິຮູບ ແລະ ເສີມຂະຫຍາຍ ***CEPT ROO*** ເພື່ອຕອບສະໜອງກັບການປ່ຽນແປງໃຫ້ກັບຂະບວນການໆຜະລິດພາກພື້ນ ລວມທັງການປັບປຸງທີ່ຈຳເປັນ ເຊັ່ນ: ການນຳໃຊ້ ກ່ຽວກັບລະບຽບການແຈ້ງລ່ວງໜ້າ ***(Advance Rulings)*** ແລະ ການປັບປຸງ ***ROO***.
- ເຮັດໃຫ້ລະບຽບການຢັ້ງຢືນທາງປະຕິບັດການສຳລັບ ***CEPT ROO*** ງ່າຍຂຶ້ນ ແລະ ເຮັດໃຫ້ ການເສີມຂະຫຍາຍລວມທັງການນຳໃຊ້ສິ່ງອຳນວຍຄວາມສະດວກມີຄວາມຕໍ່ເນື່ອງ ເຊັ່ນ: ການປະຕິບັດການທາງອີເລັກໂທຼນິກ ໃນການຢັ້ງຢືນເຖິງທີ່ມາຂອງຜະລິດຕະພັນ ແລະ ໃຫ້ລະ ບຽບການຂອງຊາດມີຄວາມກົມກຽວ ຫຼື ໄປໃນແລວດຽວກັນ ເທົ່າທີ່ຈະເປັນໄປໄດ້.
- ທົບທວນ ***ROO*** ທີ່ໄດ້ຜ່ານການປະຕິບັດໂດຍບັນດາປະເທດສະມາຊິກອາຊຽນ, ທັງໂດຍແຕ່ລະປະເທດ ແລະ ທັງໂດຍລວມທຸກປະເທດ ແລະ ສຳຫຼວດຄວາມເປັນໄປໄດ້ກ່ຽວກັບກົນໄກລວມຂອງ ROO (Cumula- tion Mechanism)

**16.** ການອຳນວຍຄວາມສະດວກທາງການຄ້າ. ການໄຫລວຽນຂອງຂະບວນການດ້ານການຄ້າ ແລະ ພາສີທີ່ງ່າຍດາຍ, ມີຄວາມກົມກຽວກັນ ແລະ ໄດ້ມາດ ຖານ,

ລະບຽບການ ແລະ ຂໍ້ມູນຂ່າວສານນັ້ນ ຄາດວ່າຈະຊ່ວຍຫລຸດຜ່ອນຕົ້ນທຶນການຄ້າພາຍໃນຂອງອາຊຽນ ອັນຈະເປັນການສົ່ງເສີມການແຂ່ງຂັນທາງດ້ານການສົ່ງອອກ ແລະ ອຳນວຍຄວາມສະດວກໃຫ້ກັບການເຊື່ອມໂຍງກັນຂອງອາຊຽນໃຫ້ກາຍເປັນຕະຫຼາດອັນດຽວສຳລັບສິນຄ້າ, ການບໍລິການ, ການ ລົງທຶນ ແລະ ການເປັນຖານການຜະລິດອັນດຽວ.

<u>**ພາກການປະຕິບັດ:**</u>

- ປະເມີນເງື່ອນໄຂອຳນວຍຄວາມສະດວກທາງການຄ້າໃນອາຊຽນ.
- ພັດທະນາ ແລະ ປະຕິບັດແຜນວຽກການອຳນວຍຄວາມສະດວກໃຫ້ວຽກງານການຄ້າ ເປົ້າໝາຍອັນສຳຄັນກໍ່ແມ່ນແນໃສ່ເຮັດໃຫ້ລະບຽບການດ້ານການຄ້າ, ພາສີ ແລະ ການໄຫລວຽນຂໍ້ມູນຂ່າວສານ ງ່າຍດາຍ, ກົມກຽວກັນ ແລະ ໄດ້ມາດຕະຖານ.
- ສົ່ງເສີມຄວາມໂປ່ງໃສ ແລະ ຄວາມຊັດເຈນຂອງທຸກການປະຕິບັດ ແລະ ການແຊກແຊງຂອງຜູ້ມີສ່ວນຮ່ວມ ທີ່ກ່ຽວຂ້ອງໃນການດຳເນີນການດ້ານການຄ້າສາກົນ.
- ສ້າງຕັ້ງກົນໄກການຮ່ວມມືເພື່ອອຳນວຍຄວາມສະດວກດ້ານການຄ້າ ພາກພື້ນ.
- ສ້າງຕັ້ງຖານຮອງຮັບເພື່ອອຳນວຍຄວາມສະດວກດ້ານການຄ້າຂອງອາ ຊຽນ.
- ພັດທະນາມາດຕະການຕ່າງໆໃນລະດັບຊາດເພື່ອສະໜັບສະໜູນ ແລະ ຮັບປະກັນການປະຕິບັດ ຂໍ້ລິເລີ່ມຕ່າງໆໃນພາກພື້ນ ໃຫ້ມີປະສິດທິຜົນຢ່າງເດັ່ນຊັດ.
- ພັດທະນາແຜນງານການສ້າງຄວາມສາມາດຕ່າງໆຢ່າງກວ້າງຂວາງ ເພື່ອຮັບປະກັນໃຫ້ແກ່ການປະຕິບັດວຽກງານໃຫ້ເດີນແມ່ນແລ່ນສະດວກ

**17.** ການເຊື່ອມໂຍງທາງດ້ານພາສີ. ໂດຍເຫັນໄດ້ໃນການເລັ່ງການສ້າງຕັ້ງປະຊາຄົມເສດຖະກິດອາຊຽນ, ວິໄສທັດພາສີອາຊຽນປີ ***2015***, ໂດຍສະເພາະ

ແຜນຍຸດທະສາດແຕ່ປີ ***2005-2010*** ໃນການພັດທະນາທາງດ້ານພາສີ ນັ້ນ ແມ່ນແນໃສ່: (ກ) ເຊື່ອມໂຍງໂຄງສ້າງພາສີ, (ຂ) ຈັດປະເພດອັດຕາພາສີໃຫ້ ທັນສະໄໝຂຶ້ນ, ຕີລາຄາແຈ້ງເສຍພາສີ, ການກໍານົດແຫລ່ງກໍາເນີດ ແລະ ການສ້າງຕັ້ງພາສີອາຊຽນດ້ວຍລະບົບອີເລັກໂທຼນິກ. (ຄ) ການສະສາງພາສີ ຢ່າງລາບລື້ນດີ. (ງ) ສົ່ງເສີມການພັດທະນາຊັບພະຍາກອນມະນຸດ. (ຈ) ສົ່ງເສີມໃຫ້ເກີດມີຄວາມເປັນຫຸ້ນສ່ວນກັບອົງການສາກົນຕ່າງໆທີ່ກ່ຽວຂ້ອງ. (ສ) ເຮັດໃຫ້ຊ່ອງຫວ່າງການພັດທະນາດ້ານພາສີແຄບລົງ. (ຊ) ນໍາໃຊ້ເຕັກນິກໃນການຄວບຄຸມຄວາມສ່ຽງ ແລະ ຄວບຄຸມຢ່າງມີການກວດກາ ***(PCA)*** ເພື່ອອໍາ ນວຍຄວາມສະດວກໃຫ້ແກ່ການຄ້າ.

**<u>ພາກປະຕິບັດ:</u>**

- ເຮັດໃຫ້ເຕັກນິກພາສີທັນສະໄໝຂຶ້ນ, ມີການແນະນໍາທີ່ງ່າຍດາຍ ແລະ ກົມກຽວກັນໃນການປະຕິບັດການດ້ານອັດຕາພາສີ ໃຫ້ຖືກຕ້ອງຕາມລະ ບຽບການ ແລະ ໄດ້ມາດຖານສາກົນ, ນໍາມາປະຕິບັດໃຫ້ໄດ້ຮັບຜົນທີ່ດີໃນຮູບແບບພາກພື້ນວ່າດ້ວຍການບັນຈຸຫີບຫໍ່ ແລະ ການຂົນສົ່ງ (ເອກະສານກ່ຽວກັບການບັນຈຸຫີບຫໍ່ຢ່າງຈະແຈ້ງຂອງອາຊຽນ ແລະ ການປະ ກາດແຈ້ງການປີ 2007).
- ສ້າງຕັ້ງລະບົບພາສີຜ່ານແດນອາຊຽນ ເພື່ອອໍານວຍຄວາມສະດວກ ໃນການເຄື່ອນຍ້າຍສິນຄ້າ ແລະ ພາຫານະຂົນສົ່ງ.
- ສ້າງຕັ້ງລະບົບພາສີອາຊຽນແບບພິເສດເຊັ່ນ: ການອານຸຍາດຊົ່ວຄາວ, ການປະຕິບັດການພາຍນອກ ແລະ ພາຍໃນ, ເພື່ອອໍານວຍຄວາມສະດວກໃນການເຊື່ອມໂຍງການຜະລິດ ແລະ ຕ່ອງໂສ້ການຈໍລະຈອນສິນ ຄ້າ.
- ນໍາໃຊ້ມາດຖານສາກົນອື່ນໆ ແລະ ເພື່ອຮັບປະກັນໃຫ້ລະບົບການຈັດປະເພດພາສີເປັນລະບົບດຽວກັນ, ລະບົບການປະເມີນຄ່າທີ່ກົງກັນຕາມຈຸດປະສົງທາງດ້ານພາສີ ແລະ ຄວາມກົມກຽວກັນຂອງລະບົບປະສານ ງານ

ແລະ ການກຳນົດແຫ່ງກຳເນີດສິນຄ້າ ແລະ ການແລກປ່ຽນຂໍ້ມູນຂ່າວສານຕາມທີ່ເຫັນວ່າຈະເປັນໄປໄດ້.

- ຈັດຕັ້ງປະຕິບັດໃຫ້ມີພາສີອີເລັກໂທຼນິກ (e-ASEAN) ຂອງອາຊຽນ.
- ສົ່ງເສີມການຊ່ວຍເຫຼືອເຊິ່ງກັນ ແລະ ກັນເພື່ອເຮັດໃຫ້ປະສິດທິພາບທາງດ້ານພາສີໃຫ້ດີຂຶ້ນ ແລະ ມີປະສິດທິຜົນ.

**18.** ການກວດກາທີ່ຈຸດດຽວ ***(ASEAN Single Window)***. ການປະຕິບັດມາດຕະການເພື່ອເຮັດໃຫ້ການປະສານງານ, ມາດຖານທາງການຄ້າ ແລະ ລະ ບຽບການທາງດ້ານພາສີງ່າຍຂຶ້ນ, ການປະຕິບັດ ແລະ ການນຳໃຊ້ ***ICT*** ໃນທຸກຂົງເຂດທີ່ກ່ຽວຂ້ອງກັບການອຳນວຍຄວາມສະດວກທາງການຄ້າ ຊຶ່ງເປັນສິ່ງທີ່ ສຳຄັນ ແລະ ສຳຄັນທີ່ສຸດໃນການສ້າງລະບົບການກວດກາທີ່ຈຸດດຽວຂອງອາ ຊຽນ. ***ASW*** ແມ່ນບ່ອນທີ່ 10 ປະເທດນຳໃຊ້ປະຕູດຽວ ແລະ ແຕ່ລະປະເທດ ເຮັດວຽກ ແລະ ມີຄວາມເຊື່ອມໂຍງກັນ. ***ASW*** ແຫ່ງຊາດ ແມ່ນການຍອມຮັບເອົາບັນດາຂໍ້ມູນຂອງພາກສ່ວນທີ່ກ່ຽວຂ້ອງທັງໝົດໃນຕ່ອງໂສ້ການສະໜອງສິນຄ້າສາກົນ, ການປະເມີນຜົນຄັ້ງດຽວຂອງຂໍ້ມູນໃຫ້ກົງກັນ, ການຕັດສິນໃຈເທື່ອດຽວໃນດ້ານພາສີວ່າດ້ວຍການແຈ້ງຫີບຫໍ່ສິນຄ້າ ຊຶ່ງເຮັດໃຫ້ການກວດກາທາງດ້ານພາສີໄວຂຶ້ນ, ຫຼຸດຜ່ອນເວລາການດຳເນີນທຸລະກິດ ແລະ ຕົ້ນທຶນສ່ວນໃດສ່ວນໜຶ່ງ ຂອງການດຳເນີນທຸລະກິດພ້ອມທັງເສີມຂະຫຍາຍການແຂ່ງຂັນທາງດ້ານການຄ້າ ໃຫ້ມີປະສິດທິຜົນ.

**<u>ພາກການປະຕິບັດ:</u>**

- ***ອາຊຽນ 6*** (ບູໄນ ດາລູຊາລາມ, ອິນໂດເນເຊຍ, ມາເລເຊຍ, ຟີລິປິນ, ສິງ ກະໂປ ແລະ ໄທ) ຈະປະຕິ ບັດແຜນກາ ***ASW*** ແຫ່ງຊາດຊ້າສຸດໃນປີ ***2008.***
- ***ອາຊຽນ 4*** (ກຳປູເຈຍ, ລາວ, ມຽນມາ, ຫວຽດນາມ) ຈະປະຕິບັດແຜນ ***ASW*** ແຫ່ງຊາດບໍ່ໃຫ້ ກາຍປີ ***2012***.

- ມາດຖານຂໍ້ມູນພື້ນຖານແມ່ນອີງຕາມຮູບແບບຂໍ້ມູນຂອງ ***WCO*** ທີ່ໄດ້ ກໍານົດໄວ້ ແລະ ຂໍ້ແນະນໍາຂໍ້ມູນທາງການຄ້າຂອງສະຫາປະຊາຊາດ ***(UNTDED)*** ແລະ ການແນະນໍາຂໍ້ມູນທີ່ດ່ວນ, ການຕິດຕໍ່ພົວພັນກັນ, ເທັກໂນໂລຊີ (ICT) ໂດຍໃຊ້ລະບົບດີຈິຕອນ ແລະ ການແລກປ່ຽນ.

**19.** ມາດຖານແລະສິ່ງກີດກັນເຕັກນິກຕ່າງໆຕໍ່ການຄ້າ. ລະບົບມາດຖານ, ການຮັບປະກັນດ້ານຄຸນນະພາບ, ມາດຖານຈາກແຫ່ ຼງຜະລິດ ແລະ ການວັດຄຸນນະພາບນັ້ນ ແມ່ນສິ່ງທີ່ສໍາຄັນໃນການສົ່ງເສີມ ແລະ ຫຼຸດຜ່ອນຕົ້ນທຶນການຜະລິດໃຫ້ມີປະສິດທິພາບໃນການນໍາເຂົ້າ ແລະ ສົ່ງອອກຂອງພາກພື້ນ. ມາດຖານການວັດຄ່າອັນດຽວກັນ ແລະ ການປະຕິບັດໃນຮູບແບບອັນດຽວກັນ ແມ່ນນະໂຍບາຍຂອງອາຊຽນ ເພື່ອໃຫ້ເປັນມາດຖານອັນດຽວກັນສໍາລັບການກວດກາດ້ານຄຸນນະພາບໃຫ້ໂປ່ງໃສຂຶ້ນ ແລະ ເຮັດໃຫ້ເອກະຊົນມີສ່ວນຮ່ວມ ຢ່າງ ຫ້າວຫັນ.

**<u>ພາກການປະຕິບັດ:</u>**

- ມາດຖານທີ່ກົມກຽວກັນ, ຂັ້ນຕອນການປະເມີນຄວາມສອດຄ່ອງ ແລະ ລະບຽບການທາງດ້ານເຕັກນິກ ຕະຫຼອດເຖິງການປັບປຸງໃຫ້ຖືກຕ້ອງກັບສາກົນ;[1]
- ພັດທະນາ ແລະຈັດຕັ້ງປະຕິບັດຂະແໜງການແຜນຮັບຮູ້ຊຶ່ງກັນ ແລະກັນ ວ່າດ້ວຍການປະເມີນຄວາມສອດຄ່ອງສໍາລັບຂະແໜງການສະເພາະ ທີ່ໄດ້ລະບຸໄວ້ໃນສັນຍາຂອບອາຊຽນ ວ່າດ້ວຍແຜນຮັບຮູ້ຊຶ່ງກັນ ແລະ ກັນ (ເບິ່ງ Footnote 1);

---

1 ລະບຸມາດຖານດ້ານເຕັກນິກ ແລະຂະບວນການປະເມີນຜົນໃຫ້ສອດຄ່ອງກັນເພື່ອໃຫ້ແທດເໝາະກັບຂະແໜງການ MRA ທີ່ຈະໄດ້ຮັບການພັດທະນາ ແລະຈະໄດ້ຖືກພິຈາລະນາເຖິງການກະທົບທາງດ້ານການຄ້າຂອງ ອາຊຽນ, ຄວາມສົມບູນຂອງລະບຽບການ, ໂຄງຮ່າງພື້ນຖານດ້ານເຕັກນິກແມ່ນຈະໄດ້ລາຍງານໃຫ້ຜູ້ມີອໍານາດທີ່ກ່ຽວຂ້ອງ

- ຍົກລະດັບດ້ານເຕັກນິກພື້ນຖານໂຄງລ່າງ ແລະ ຄວາມສາມາດໃນການ ວິໄຈ, ການປະເມີນຄ່າ, ການກວດສອບ, ການອອກໃບຢັ້ງຢືນ ແລະ ການຮັບຮອງ ບົນພື້ນຖານວິທີການ ແລະ ຂັ້ນຕອນທີ່ໄດ້ຮັບການຍອມ ຮັບໃນລະດັບພາກພື້ນ/ສາກົນ;
- ສົ່ງເສີມຄວາມໂປ່ງໃສໃນການພັດທະນາ ແລະ ນຳໃຊ້ມາດຖານ, ເຕັກ ນິກ ລະບຽບການ ແລະຂັ້ນຕອນການປະເມີນຄວາມສອດຄ່ອງໃຫ້ຖືກ ຕ້ອງກັບເງື່ອນໄຂຂອງສັນຍາອົງການການຄ້າໂລກວ່າດ້ວຍສິ່ງກີດກັ້ນ ທາງດ້ານເຕັກນິກຕໍ່ການຄ້າ ແລະ ລະບຽບການນະໂຍບາຍອາຊຽນວ່າດ້ວຍມາດຖານ ແລະ ຄວາມສອດຄ່ອງຕາມນະໂຍບາຍຂອງອາຊຽນ ເພື່ອເຮັດໃຫ້ກົດລະບຽບມີມາດຖານອັນດຽວກັນ.
- ສ້າງຄວາມເຂັ້ມແຂງໃຫ້ກັບລະບົບການຕິດຕາມສະພາບຕະຫຼາດທີ່ໝັ້ນຄົງ ເພື່ອຮັບປະກັນໃຫ້ການປະຕິບັດກົດລະບຽບທີ່ກົມກຽວກັນ ໃຫ້ໄດ້ຮັບຜົນສຳເລັດ.
- ພັດທະນາແຜນງານການເສີມສ້າງຄວາມສາມາດເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດໃຫ້ເດີນແມ່ນແລ່ນສະດວກ.

## ກ.2. <u>ການໄຫຼວຽນຢ່າງເສລີດ້ານການບໍລິການ</u>:

**20.** ການໄຫຼວຽນຢ່າງເສລີຂອງການຄ້າດ້ານການບໍລິການ ແມ່ນອົງປະກອບໜຶ່ງທີ່ສຳຄັນໃນການສ້າງປະຊາຄົມເສດຖະກິດອາຊຽນໃຫ້ເປັນຈິງ, ຊຶ່ງຈະບໍ່ມີຂໍ້ຈຳກັດທີ່ເປັນພື້ນຖານສະໜອງດ້ານການບໍລິການຂອງອາຊຽນ ໃນການຕອບສະໜອງການບໍລິການ ແລະ ສ້າງຕັ້ງວິສາຫະກິດຂ້າມຊາຍແດນພາຍໃນພາກ ພື້ນບົນພື້ນຖານລະບຽບການພາຍໃນ. ການເປີດກ້ວາງດ້ານການບໍລິການແມ່ນໄດ້ຖືກດຳເນີນການຜ່ານຮອບການເຈລະຈາໂດຍສ່ວນຫຼາຍແມ່ນດຳເນີນການເຈລະຈາໂດຍຄະນະກຳມະການປະສານງານດ້ານການບໍລິການ. ການເຈ

ລະຈາຂອງບາງຂະແໜງການບໍລິການສະເພາະ ເຊັ່ນ: ການບໍລິການດ້ານການ ເງິນ ແລະ ການຂົນສົ່ງທາງອາກາດ ແມ່ນໄດ້ດໍາເນີນການເຈລະຈາໂດຍກະ ຊວງທີ່ກ່ຽວຂ້ອງ. ໃນການເປີດເສລີ ດ້ານການບໍລິການນັ້ນ ແມ່ນບໍ່ອະນຸຍາດ ໃຫ້ຖອນພັນທະ ແລະ ຂໍ້ໂບະຍານ ທີ່ໄດ້ເຫັນດີຕົກລົງກ່ອນແລ້ວນັ້ນ ແມ່ນໄດ້ ປະຕິບັດກັບທຸກໆປະເທດສະມາຊິກອາຊຽນ.

**21.** ໃນການອໍານວຍຄວາມສະດວກໃຫ້ແກ່ການໄຫຼວຽນຢ່າງເສລີດ້ານການບໍ ລິການ ໃນປີ ***2015***, ອາຊຽນ ຍັງສືບຕໍ່ພິຈາລະນາກ່ຽວກັບແຜນຮັບຮູ້ທາງດ້ານ ຄຸນວຸດທິດ້ານວິຊາຊີບ ໂດຍແນໃສ່ເພື່ອອໍານວຍຄວາມສະດວກໃນການເຄື່ອນ ໄຫວອູ່ພາຍໃນພາກພື້ນ.

**<u>ພາກການປະຕິບັດ:</u>**

- ລຶບລ້າງອຸປະສັກຕໍ່ການຄ້າດ້ານການບໍລິການທັງໝົດສໍາລັບ 4 ຂະແໜງ ການບໍລິການທີ່ເປັນບູລິມະສິດ ຄື: ການຂົນສົ່ງທາງອາກາດ, E- ASEAN, ການບໍລິການດ້ານສຸຂະພາບ ແລະ ການທ່ອງທ່ຽວ ໃນປີ ***2010*** ແລະ ຂະແໜງການບໍລິການບູລິມະສິດທີ 5, ການບໍລິການພາລາ ທິການດ້ານການຂົນສົ່ງ-ສາທາລະນຸປະໂພກ ໃນປີ ***2013***.
- ລຶບລ້າງອຸປະສັກຕໍ່ການຄ້າ ດ້ານການບໍລິການທັງໝົດ ສໍາລັບຂະແໜງ ການບໍລິການອື່ນໆທັງໝົດ ໃນປີ ***2015***.
- ດໍາເນີນການເປີດກວ້າງດ້ານການບໍລິການໂດຍຜ່ານຮອບເຈລະຈາຢ່າງ ຕໍ່ເນື່ອງ ໃນທຸກໆ 2 ປີ ຈົນເຖິງປີ ***2015***, ຕົວຢ່າງເຊັ່ນ: ***2008, 2010, 2012, 2014***, ແລະ ***2015***.

- ວາງເປົ້າໝາຍໃນການກໍານົດເປີດຂະແໜງການບໍລິການຍ່ອຍໃໝ່ ຢ່າງ ໜ້ອຍສຸດສໍາລັບການເຈລະຈາຂອງແຕ່ລະຮອບ ແມ່ນ: ***10*** ຂະແໜງ ການຍ່ອຍ ໃນປີ ***2008***, ***15*** ຂະແໜງການຫຍ່ອຍ ໃນປີ ***2010***, ***20*** ຂະ

ແໜງການຫຍ່ອຍ ໃນປີ ***2012***, ***20*** ຂະແໜງການຫຍ່ອຍ ໃນປີ ***2014*** ແລະ ***7*** ຂະແໜງການຍ່ອຍ ໃນປີ ***2015***, ໂດຍອີງໃສ່ບັນຊີສາລະບານເອກະພາບຂອງອົງການການຄ້າໂລກ GATS W/120.

- ກໍານົດຕາຕະລາງຂໍ້ຜູກພັນສໍາລັບທຸກໆຮອບການເຈລະຈາ ແມ່ນໃຫ້ສອດຄ່ອງກັບປັດໄຈຕ່າງໆ ດັ່ງລຸ່ມນີ້:
  - ບໍ່ໃຫ້ມີຂໍ້ຈໍາກັດສໍາລັບຮູບແບບທີ:1 ແລະ 2, ໂດຍໃຫ້ມີຂໍ້ຍົກເວັ້ນອັນເນື່ອງຈາກເຫດຜົນທາງດ້ານລະບຽບການທີ່ມີຢູ່ຈິງ (ເຊັ່ນວ່າ: ຄວາມປອດໄພຂອງລັດ) ຊຶ່ງແມ່ນຂຶ້ນກັບການເຫັນດີຕົກລົງເປັນແຕ່ລະກໍລະນີ ໂດຍປະເທດສະມາຊິກທັງໝົດ.
  - ອະນຸຍາດໃຫ້ຕ່າງປະເທດ (ອາຊຽນ) ມີທຶນຈົດທະບຽນ ບໍ່ຫຼຸດ ***51%*** ໃນປີ ***2008***, ແລະ ***70%*** ໃນປີ ***2010*** ສາລັບ ***4*** ຂະແໜງບໍລິການທີ່ເປັນບູລິມະສິດ; ບໍ່ຫຼຸດ ***49%*** ໃນປີ ***2008***, ***51%*** ໃນປີ ***2010***, ແລະ ***70%*** ໃນປີ ***2013*** ສາລັບຂະແໜງບໍລິການຂົນສົ່ງສາຫາລະນຸປະໂພກ; ແລະ ບໍ່ຫຼຸດ ***49%*** ໃນປີ ***2008***, ***51%*** ໃນປີ ***2010***, ແລະ ***70%*** ໃນປີ ***2015*** ສາລັບ ຂະແໜງບໍລິການອື່ນໆ.
  - ດໍາເນີນການລົບລ້າງຂໍ້ຈໍາກັດຕໍ່ການເຂົ້າເຖິງຕະຫຼາດ, ຂອງຮູບແບບທີ 3 ໃນປີ ***2015***.
  - ກໍານົດປັດໄຈຂອງການເປີດກ້ວາງສໍາລັບຂໍ້ຈໍາກັດຕ່າງໆຕໍ່ການປະ ຕິບັດແບບຄົນໃນຊາດ, ຮູບແບບທີ 4, ແລະຂໍ້ຈໍາກັດໃນຕາຕະລາງຂໍ້ຜູກພັນໂດຍລວມ ສໍາລັບແຕ່ລະຮອບການເຈລະຈາ ໃນປີ ***2009***.
- ກໍານົດຕາຕະລາງຂໍ້ຜູກພັນ ໂດຍອີງຕາມບັນດາປັດໄຈທີ່ໄດ້ເຫັນດີຕົກລົງກັນສໍາລັບຂໍ້ຈໍາກັດຕ່າງໆຕໍ່ການປະຕິບັດແບບຄົນໃນຊາດ, ຮູບແບບທີ 4.
- ສໍາເລັດການສ້າງຕາຕະລາງສັງລວມ ບັນດາສິ່ງກີດຂວາງຕໍ່ການບໍລິການພາຍໃນເດືອນ 8 ປີ 2008;
- ອານຸຍາດໃຫ້ມີການໂຍະຍານທັງໝົດ[2], ທີ່ກວມເອົາຂະແໜງການຍ່ອຍໂດຍລວມທັງໝົດທີ່ໄດ້ຍົກເວັ້ນການເປີດກ້ວາງ ແລະ ຂະແໜງການ

2 ຈໍານວນ 15% ສໍາລັບການໂຍະຍານທັງໝົດ ຈະຖືກທົບທວນຄືນ ຂຶ້ນກັບການສໍາເລັດສ້າງຕາຕະລາງ ສັງລວມບັນດາ ຂໍ້ຈໍາ ກັດ ຕ່າງໆ ໃນປີ 2008

ຫຍ່ອຍທີ່ບໍ່ໄດ້ບັນລຸຄືບຕາມປັດໄຈທັງໝົດທີ່ໄດ້ເຫັນດີຕົກລົງກັນ ເພື່ອເປີດກ້ວາງສໍາລັບຮູບແບບຂອງການກະຈາຍການບໍລິການ, ໃນຕາຕະລາງຂໍ້ຜູກພັນການເປີດກ້ວາງ.

- ໃນການສ້າງຕາຕະລາງຂໍ້ຜູກພັນການເປີດກວ້າງແຕ່ລະຮອບ ຄວນຈະໃຫ້ສອດຄ່ອງກັບບັນດາຂໍ້ໂຍະຍານຕ່າງໆ ດັ່ງລຸ່ມນີ້:
  - ຄວາມເປັນໄປໄດ້ເພື່ອໃຫ້ນໍາທັນໃນຮອບເຈລະຈາຄັ້ງຕໍ່ໄປ, ຖ້າຫາກວ່າປະເທດສະມາຊິກໃດໜຶ່ງບໍ່ສາມາດບັນລຸປັດໄຈຂໍ້ຜູກພັນທີ່ໄດ້ກໍານົດຂຶ້ນ ໃນຮອບທີ່ຜ່ານມາ.
  - ອະນຸຍາດໃຫ້ມີການປ່ຽນແທນຂະແໜງການຍ່ອຍອື່ນໆທີ່ນອກເໜືອຈາກຂະແໜງການຍ່ອຍທີ່ໄດ້ຮັບການຕົກລົງເຫັນດີເພື່ອເປີດກວ້າງໃນແຕ່ລະຮອບການເຈລະຈາແຕ່ເປັນຂະແໜງການຍ່ອຍທີ່ປະເທດສະມາຊິກໃດໜຶ່ງບໍ່ສາມາດສ້າງຂໍ້ຜູກພັນໃນຂະແໜງ ການຍ່ອຍທີ່ໄດ້ຕົກລົງນັ້ນ; ແລະ
  - ການເປີດກວ້າງ ດ້ວຍຮູບແບບຫຼັກການ ອາຊຽນລົບເອັກສ ***(ASEAN - X).***
- ສໍາເລັດການສ້າງແຜນຮັບຮູ້ຊຶ່ງກັນ ແລະ ກັນ ***(MRAs)*** ທີ່ພວມດາເນີນການເຈລະຈາໃນປັດຈຸບັນ, ຕົວຢ່າງ: ຂະແໜງບໍລິການດ້ານວິສາວະກໍາ, ຂະແໜງບໍລິການດ້ານການບັນຊີ, ຄຸນນະວຸດດ້ານການສໍາຫຼວດ, ຜູ້ຝຶກຫັດດ້ານການແພດ ພາຍໃນປີ ***2008***, ແລະ ຜູ້ຝຶກຫັດດ້ານທັນຕະແພດ ພາຍໃນປີ ***2009***;
- ຈັດຕັ້ງປະຕິບັດແຜນຮັບຮູ້ຊຶ່ງກັນແລະກັນຢ່າງຮີບດ່ວນເພື່ອໃຫ້ສອດຄ່ອງກັບບົດບັນຍັດທີ່ໄດ້ກ່າວໄວ້ໃນແຜນຮັບຮູ້ຊຶ່ງກັນຂອງແຕ່ລະຂະແໜງ;
- ນໍາສະເໜີ ແລະ ພັດທະນາແຜນຮັບຮູ້ຊຶ່ງກັນ ແລະ ກັນ ສໍາລັບຂະແໜງບໍລິການວິຊາຊີບດ້ານອື່ນໆ ພາຍໃນປີ ***2012*** ເພື່ອໃຫ້ສາເລັດໃນປີ ***2015***; ແລະ
- ເສີມຂະຫຍາຍດ້ານພັດທະນາຊັບພະຍາກອນມະນຸດ ແລະ ສ້າງຄວາມເຂັ້ມແຂງໃນຂະແໜງການບໍລິການ.

**<u>ສໍາລັບຂະແໜງບໍລິການດ້ານການເງິນ</u>[3],**

**22.** ມາດຕະການເປີດກວ້າງຂອງຂະແໜງບໍລິການດ້ານການເງິນ: ຈະອະນຸຍາດໃຫ້ປະເທດສະມາຊິກ ຮັບປະກັນການພັດທະນາຂະແໜງບໍລິການດ້ານ ການເງິນ ແລະ ຮັກສາສະຖຽນລະພາບຄວາມໝັ້ນຄົງທາງດ້ານການເງິນ ແລະ ເສດຖະກິດ - ສັງຄົມ. ປະເທດສະມາຊິກຈະ ໄດ້ປະຕິບັດມາດຕະການເປີດ ກ້ວາງຂອງຕົນ ຕາມຫຼັກການດັ່ງລຸ່ມນີ້:

**ກ)** ເປີດກ້ວາງດ້ວຍຫຼັກການ ອາຊຽນລົບເອັກສ ໂດຍປະເທດສະມາຊິກ ທີ່ມີຄວາມພ້ອມໃນການເປີດກວ້າງແມ່ນສາມາດດໍາເນີນການກ່ອນ ໄດ້ເລີຍ ແລະ ປະເທດສະມາຊິກອື່ນກໍເຂົ້າຮ່ວມການເປີດກ້ວາງໄດ້ ໃນພາຍຫຼັງ; ແລະ

**ຂ)** ຂັ້ນຕອນຂອງການເປີດກ້ວາງແມ່ນຄວນຈະປະຕິບັດໃຫ້ສອດຄ່ອງກັບ ເປົ້າໝາຍນະໂຍບາຍແຫ່ງຊາດ ແລະ ລະດັບການພັດທະນາຂອງຂະ ແໜງບໍລິການດ້ານການເງິນ ແລະ ເສດຖະກິດຂອງແຕ່ລະ ປະເທດ.

**<u>ພາກການປະຕິບັດ:</u>**

- ລົບລ້າງຂໍ້ຈໍາກັດຕໍ່ການເປີດກ້ວາງສໍາລັບຂະແໜງການຍ່ອຍຫຼືຮູບແບບທີ່ໄດ້ກໍານົດໄວ້ໂດຍແຕ່ລະປະເທດສະມາຊິກ ພາຍໃນປີ ***2015***; ແລະ
- ສືບຕໍ່ລົບລ້າງຂໍ້ຈໍາກັດຕໍ່ການເປີດກ້ວາງສໍາລັບຂະແໜງການຍ່ອຍຫຼື ຮູບແບບຕ່າງໆທີ່ຍັງມີຢູ່ ແລະ ບໍ່ໄດ້ກໍານົດໄວ້ໃນບັນດາ **"**ຂໍ້ໂຍະຍານ ທີ່ໄດ້ຕົກລົງເຫັນດີກັນແລ້ວ**"**, ໃຫ້ສໍາເລັດໃນປີ ***2020***.

## ກ.3. <u>ການໄຫຼວຽນຢ່າງເສລີດ້ານການລົງທຶນ</u>:

**23.** ນະໂຍບາຍເປີດກວ້າງດ້ານການລົງທຶນ ແມ່ນກຸນແຈເພື່ອເສີມຂະຫຍາຍການແຂ່ງຂັນຂອງອາຊຽນໃນການດຶງດູດເອົາການລົງທຶນໂດຍກົງຈາກຕ່າງປະ ເທດ (FDI) ຕະຫຼອດເຖິງການລົງທຶນຂອງພາຍໃນອາຊຽນເອງ. ການເປີດ

[3] ມາດຕະການທັງໝົດສໍາລັບຂະແໜງການບໍລິການດ້ານການເງິນແມ່ນຂຶ້ນກັບມາດຕະການລະມັດລະວັງເພື່ອຮັກສາສະຖຽນລະພາບທາງດ້ານການເງິນ ແລະ ແຜນດຸນການຊໍາລະ ມາດຕະການປົກປ້ອງ ດັ່ງທີ່ໄດ້ບັນຍັດພາຍໃຕ້ ຂໍ້ຕົກລົງທົ່ວໄປວ່າດ້ວຍ ການຄ້າ ດ້ານ ການບໍລິການ ຂອງອົງການ ການຄ້າໂລກ.

ກ້ວາງແບບຍືນຍົງຂອງການລົງທຶນໃໝ່ ແລະ ການລົງທຶນຄືນໃໝ່ ຈະສົ່ງເສີມ ແລະ ຮັບປະກັນກົນໄກການພັດທະນາດ້ານເສດຖະກິດ ຂອງອາຊຽນ

**24.** ການຮ່ວມມືດ້ານການລົງທຶນອາຊຽນ ແມ່ນຖືກຈັດຕັ້ງປະຕິບັດຕາມຂອບສັນຍາວ່າດ້ວຍການລົງທຶນອາຊຽນ ***(AIA)*** ປີ ***1998***, ໃນຂະນະທີ່ການປົກປ້ອງການລົງທຶນ ແມ່ນອີງໃສ່ສັນຍາອື່ນໆຕ່າງຫາກ ຕົວຢ່າງ ເຊັ່ນ: ສັນຍາອາຊຽນວ່າດ້ວຍການສົ່ງເສີມ ແລະ ປົກປ້ອງການລົງທຶນ ປີ 1987 ຫຼື ໂດຍສ່ວນໃຫຍ່ ອີງໃສ່ສັນຍາຄໍ້າປະກັນການລົງທຶນອາຊຽນ ***(IGA).***

**25.** ພາຍໃຕ້ສັນຍາວ່າດ້ວຍເຂດການລົງທຶນອາຊຽນ, ອຸດສາຫະກໍາທັງໝົດ (ໃນຂະແໜງການຜະລິດ, ກະສິກໍາ, ການປະມົງ, ປ່າໄມ້ ແລະ ບໍ່ແຮ່ ແລະ ຂະແໜງການຂຸດຄົ້ນ ແລະ ການບໍລິການ ທີ່ຕິດພັນກັບ 5 ຂະແໜງການເຫຼົ່ານີ້) ຄວນຈະເປີດ ແລະ ໃຫ້ການອານຸເຄາະປະຕິບັດແບບຄົນໃນຊາດ ໃຫ້ກັບນັກ ລົງທຶນທັງກ່ອນ ແລະ ພາຍຫຼັງໄລຍະການສ້າງຕັ້ງທຸລະກິດ, ໂດຍໃຫ້ມີຂໍ້ຍົກ ເວັ້ນບາງຢ່າງສໍາລັບຂະແໜງການທີ່ນອນຢູ່ໃນບັນຊີຍົກເວັ້ນຊົ່ວຄາວ ***(TEL)*** ແລະ ບັນຊີກະທົບໄວ ***(SL)*** ຂອງປະເທດສະມາຊິກ. ບັນຊີຍົກເວັ້ນຊົ່ວຄາວຈະໝົດໄປໃນກໍານົດເວລາທີ່ໄດ້ຕົກລົງກັນ. ເຖິງວ່າບັນຊີກະທົບໄວຈະບໍ່ໄດ້ກໍານົດໄລຍະເວລາໃຫ້ໝົດໄປ, ແຕ່ບັນຊີ SL ນີ້ ກໍຈະຖືກທົບທວນຄືນ ເປັນແຕ່ລະໄລຍະ.

**26.** ເພື່ອເສີມຂະຫຍາຍການເຊື່ອມໂຍງໃນພາກພື້ນ ຕະຫຼອດທັງການຮັກສາເຂດການລົງທຶນທີ່ມີການແຂ່ງຂັນ, ທັງສອງຂອບສັນຍາວ່າດ້ວຍເຂດການລົງທຶນອາຊຽນ ແລະ ສັນຍາອາຊຽນວ່າດ້ວຍການຄໍາ້ປະກັນການລົງທຶນ ກໍຈະຖືກທົບທວນຄືນ. ຈຸດປະສົງກໍແມ່ນເຮັດໃຫ້ສັນຍາການລົງທຶນມີລັກສະນະກ້ວາງຂວາງຮອບດ້ານ ແລະ ແທດເໝາະກັບຄວາມເປັນຈິງຂຶ້ນກວ່າເກົ່າ ຊຶ່ງຈະໄດ້ມີ

ການປັບປຸງໃນຕໍ່ໜ້າ ທາງດ້ານຮູບແບບລັກສະນະ, ບົດບັນຍັດ ແລະ ພັນທະ ຕ່າງໆ ໂດຍພິຈາລະນາຈາກບົດຮຽນການປະຕິບັດອັນດີເລີດຂອງສາກົນ ຊຶ່ງຈະເພີ້ມຄວາມເຊື່ອໝັ້ນໃຫ້ກັບນັກລົງທຶນໃນອາຊຽນ. ສັນຍາການລົງທຶນຮອບດ້ານອາຊຽນ ***(ACIA)*** ຊຶ່ງຈະສ້າງຂຶ້ນບົນພື້ນຖານຂອງສັນຍາເຂດການລົງທຶນອາຊຽນ ***(AIA)*** ແລະ ສັນຍາຄໍ້າປະກັນການລົງທຶນອາຊຽນທີ່ມີຢູ່ແລ້ວ. ອາຊຽນ ***IGA*** ຊຶ່ງຈະກວມເອົາຂອບເຂດທີ່ສໍາຄັນດັ່ງຕໍ່ໄປນີ້:

**ການປົກປ້ອງການລົງທຶນ:**

**27.** ເພີ້ມການປົກປ້ອງໃຫ້ກັບນັກລົງທຶນທັງໝົດ ແລະ ການລົງທຶນຂອງເຂົາ ເຈົ້າໃຫ້ໄດ້ຮັບການຄຸ້ມຄອງ ພາຍໃຕ້ສັນຍາຮອບດ້ານ.

**ພາກການປະຕິບັດ:**

- ເພື່ອສ້າງຄວາມເຂັ້ມແຂງໃຫ້ບັນດາຂໍ້ບັນຍັດຕ່າງໆດັ່ງຕໍ່ໄປນີ້:
  - ກົນໄກການແກ້ໄຂຂໍ້ຂັດແຍ່ງດ້ານການລົງທຶນ;
  - ການໂອນ ແລະ ການສົ່ງກັບຄືນຂອງ ທຶນ, ກໍາໄລ, ສ່ວນແບ່ງ, ອື່ນໆ[4]
  - ຄວາມໂປ່ງໃສ ກ່ຽວກັບການຍຶດ ແລະ ການຊົດເຊີຍ;
  - ການປົກປ້ອງ ແລະ ຮັກສາຄວາມມີສະເຖຍລະພາບຢ່າງເຕັມທີ່; ແລະ
  - ການປະຕິບັດການຊົດເຊີຍ ສໍາລັບການສູນເສຍ ທີ່ເນື່ອງມາຈາກການຂັດແຍ່ງກັນ.

**ການອໍານວຍຄວາມສະດວກ ແລະ ການຮ່ວມມື:**

**28.** ເຮັດໃຫ້ລະບຽບການດ້ານການລົງທຶນ, ຂໍ້ກໍານົດ, ນະໂຍບາຍ ແລະ ຂັ້ນ ຕອນຕ່າງໆສອດຄ່ອງ ແລະ ສາມາດຄາດການໄດ້ລ່ວງໜ້າ,

---

4 ບັນດາລາຍການເຫຼົ່ານີ້ ທີ່ຕິດພັນກັບ ການເຄື່ອນຍ້າຍທຶນ, ແມ່ນຈະຕ້ອງປະຕິບັດຕາມຫຼັກການແນະນໍາຂອງການຍ້າຍທຶນ ດັ່ງທີ່ໄດ້ກ່າວໄວ້ໃນ ພາກທີ A4 ການເຄື່ອຍ້າຍ ທຶນ ຢ່າງເສລີ", ໂດຍສະເພາະແມ່ນ ການອະນຸຍາດການເຄື່ອນ ຍ້ານທຶນໝູນ ວຽນທີມີຈໍານວນຫຼາຍ.

**<u>ພາກການປະຕິບັດ:</u>**

- ເຮັດໃຫ້ນະໂຍບາຍດ້ານການລົງທຶນ ມີຄວາມສອດຄ່ອງ ກົມກຽວ ເທົ່າທີ່ຈະເປັນໄປໄດ້ ເພື່ອໃຫ້ບັນລຸການເປັນອຸດສາຫະກຳທີ່ສົມບູນ ແລະ ການເຊື່ອມໂຍງທາງດ້ານເສດຖະກິດ;
- ເຮັດໃຫ້ຂັ້ນຕອນຂອງການຍື່ນຄຳຮ້ອງຂຶ້ນທະບຽນ ແລະ ການອະນຸມັດມີຄວາມກະທັດຮັດ ແລະ ສະດວກຂຶ້ນ;
- ສົ່ງເສີມການເຜີຍແຜ່ຂໍ້ມູນຂ່າວສານດ້ານການລົງທຶນ: ບັນດາລະບຽບ ການ, ຂໍ້ກຳນົດ, ນະໂຍບາຍ ແລະ ຂັ້ນຕອນຕ່າງໆ ລວມເຖິງລະບົບ ການລົງທຶນແບບປະຕູດຽວ ຫຼື ກຳມະການສົ່ງເສີມການລົງທຶນ;
- ສ້າງຄວາມເຂັ້ມແຂງທາງດ້ານຖານຂໍ້ມູນໃນທຸກຮູບແບບຂອງການລົງທຶນທັງໝົດ ທີ່ກວມເອົາສິນຄ້າ ແລະ ການບໍລິການ ເພື່ອອຳນວຍຄວາມສະດວກໃຫ້ແກ່ການກຳນົດດ້ານນະໂຍບາຍ;
- ເສີມຂະຫຍາຍຂອດການປະສານງານພາຍໃນ ລະຫ່ວາງບັນດາກະ ຊວງ ແລະ ຂະແໜງການທີ່ກ່ຽວຂ້ອງ;
- ປຶກສາຫາລືກັບບັນດາພາກເອກະຊົນອາຊຽນ ເພື່ອອ ໍນວຍຄວາມສະດວກດ້ານການລົງທຶນ; ແລະ ສືບຕໍ່ດຳເນີນການໃຫ້ສຳເລັດໃນລະດັບຂົງເຂດອາຊຽນ ຢ່າງກ້ວາງຂວາງ ຕະຫຼອດເຖິງການເຊື່ອມໂຍງເສດຖະ ກິດແບບສອງຝ່າຍ.

**<u>ການສົ່ງເສີມໂຄສະນາເຜີຍແຜ່ ແລະ ສ້າງຄວາມເຂົ້າໃຈ:</u>**

**29.** ສົ່ງເສີມອາຊຽນໃຫ້ເປັນເຂດການເຊື່ອມໂຍງດ້ານການລົງທຶນ ແລະ ເຄືອຂ່າຍການຜະລິດ.

**<u>ພາກການປະຕິບັດ:</u>**

- ສ້າງສະພາບແວດລ້ອມທີ່ຈຳເປັນ ເພື່ອ ສົ່ງເສີມການລົງທຶນໃນທຸກຮູບ ແບບ ແລະ ຂະແໜງການທີ່ເຕີບໂຕໃໝ່ ຢູ່ໃນອາຊຽນ.
- ສົ່ງເສີມການລົງທຶນພາຍໃນອາຊຽນ, ໂດຍສະເພາະແມ່ນ ການລົງທຶນ ຈາກປະເທດອາຊຽນ 6 ເຂົ້າ ສູ່ປະເທດ CLMV.
- ສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ທຸລະກິດ ຂ້າມຊາດ ໃຫ້ເຕີບໃຫຍ່ຂະ ຫຍາຍຕົວ.
- ສົ່ງເສີມອຸດສາຫະກຳແລະ ເຄືອຂ່າຍການຜະລິດ ລະຫວ່າງທຸລະກິດ ຂ້າມຊາດຢູ່ໃນອາຊຽນ.
- ສົ່ງເສີມການຮ່ວມມືດ້ານການລົງທຶນ ໂດຍເນັ້ນໃສ່ການຮວມກຸ່ມໃນ ພາກພື້ນ ແລະ ເຄືອຂ່າຍ ການຜະລິດ.
- ຂະຫຍາຍຜົນກຳໄລ ຂອງຂໍ້ລິເລີ້ມການຮ່ວມມືດ້ານອຸດສາຫະກຳອາ ຊຽນ ໃນແຜນ ***AICO*** ເພື່ອຊຸກຍູ້ການຮວມກຸ່ມໃນພາກພື້ນ ແລະ ເຄືອ ຂ່າຍການຜະລິດ ; ແລະ
- ສືບຕໍ່ສ້າງຕັ້ງເຄືອຂ່າຍທີ່ມີປະສິດທິຜົນຕາມສັນຍາສອງຝ່າຍວ່າດ້ວຍ ການຫຼີກລ້ຽງການເກັບອາກອນຊ້ຳຊ້ອນລະຫວ່າງບັນດາປະເທດອາ ຊຽນດ້ວຍ ກັນ.

**<u>ການເປີດກ້ວາງ:</u>**

**30.** ເພີ້ມການເປີດກ້ວາງດ້ານນະໂຍບາຍການລົງທຶນຂອງບັນດາປະເທດສະ ມາຊິກອາຊຽນ ເພື່ອບັນລຸການເປີດເສລີດ້ານການລົງທຶນ ໃນປີ ***2015***.

**<u>ພາກການປະຕິບັດ:</u>**

- ປະຕິບັດແບບບໍ່ມີການແບ່ງແຍກ, ລວມທັງການປະຕິບັດແບບຄົນ ພາຍໃນຊາດແລະການປະຕິບັດການໃຫ້ຄວາມອານຸເຄາະຍິ່ງໃຫ້ກັບນັກລົງທຶນ

ໃນອາຊຽນ ໂດຍໃຫ້ມີກຳຈັດໜ້ອຍທີ່ສຸດເທົ່າທີ່ຈະເປັນໄດ້ ແລະ ລົບລ້າງບັນດາ ຂໍ້ຈຳກັດຕ່າງໆເຫຼົ່ານັ້ນ;

- ຫຼຸດຜ່ອນ ແລະ ລົບລ້າງບັນດາຂໍ້ຈຳກັດຕ່າງໆ ເທົ່າທີ່ຈະເປັນໄດ້, ບັນດາຂໍ້ຈຳກັດຕ່າງໆຕໍ່ການລົງທຶນໃນຂະແໜງການເຊື່ອມໂຍງບູລິ ມະສິດ ທີ່ກວມເອົາ ສິນຄ້າ, ແລະ ຫຼຸດຜ່ອນ ຫຼື ລົບລ້າງມາດຕະການຂໍ້ຫ້າມດ້ານການລົງທຶນ ເທົ່າທີ່ຈະເປັນໄດ້.
- ຫຼຸດຜ່ອນ ແລະ ລົບລ້າງບັນດາມາດຕະການຂໍ້ຈຳກັດດ້ານການລົງທຶນ ແລະ ອຸປະສັກອື່ນໆ ລວມທັງເງື່ອນໄຂຕ່າງໆໃນການລົງທຶນເທົ່າທີ່ຈະ ເປັນໄດ້.

**ກ.4. <u>ການໄຫຼວຽນຢ່າງເສລີຂອງທຶນ</u>:**

**31.** ເສີມຂະຫຍາຍການເຊື່ອມໂຍງ ແລະ ພັດທະນາຕະຫຼາດທຶນອາຊຽນ ໃຫ້ ເຂັ້ມແຂງ.

**<u>ພາກການປະຕິບັດ:</u>**

- ບັນລຸຄວາມກົມກຽວດ້ານມາດຖານຕະຫຼາດທຶນໃນອາຊຽນໃນດ້ານການກຳນົດລະບຽບການໆຄ້ຳປະກັນໜີ້ສິນ, ເງື່ອນໄຂໃນການເປີດ ເຜີຍຂໍ້ມູນ ແລະ ການເຜີຍແຜ່ດ້ານລະບຽບການ;
- ອຳນວຍຄວາມສະດວກໃນແຜນຮັບຮູ້ຊຶ່ງກັນ ແລະ ກັນ ຫຼື ສັນຍາວ່າດ້ວຍການຮັບຮູ້ດ້ານຄຸນນະວຸດ, ການສຶກສາ ແລະ ປະສົບການຂອງນັກການຕະຫຼາດ;
- ບັນລຸຂໍ້ໂຍະຍານທາງດ້ານການໃຊ້ພາສາທີ່ກວມເອົາບັນດາເງື່ອນໄຂຂໍ້ບັງຄັບດ້ານກົດໝາຍສຳລັບການອອກໃບຮັບປະກັນຄວາມປອດໄພ ;
- ລົບລ້າງຄວາມສັບສົນດ້ານໂຄງສ້າງອາກອນ ເທົ່າທີ່ຈະເປັນໄດ້ ເພື່ອສົ່ງເສີມຢ່າງກວ້າງຂວາງໃຫ້ແກ່ນັກລົງທຶນ ການອອກໃບຍັ້ງຢືນໜີ້ໃນອາຊຽນ.

- ອຳນວຍຄວາມສະດວກໃຫ້ແກ່ກຳລັງຂັບເຄື່ອນຂອງຕະຫຼາດແນໃສ່ເພື່ອສາຍພົວພັນລະຫວ່າງຕະຫຼາດຫຸ້ນແລະໜີ້, ລວມທັງກິດຈະກຳ ຕ່າງໆເພື່ອໃຫ້ທຶນເພີ່ມ.

**32.** ອະນຸຍາດໃນການເຄື່ອນຍ້າຍທຶນທີ່ມີຈຳນວນຫຼາຍ. ການເສລີໃນການເຄື່ອນຍ້າຍທຶນແມ່ນຈະຕ້ອງປະຕິບັດອີງໃສ່ບັນດາຫລັກການ ດັ່ງຕໍ່ໄປນີ້ :

**ກ.** ຮັບປະກັນການເປີດເສລີການໝູນວຽນຂອງເງິນທຶນໂດຍສອດຄ່ອງກັບວາລະແຫ່ງຊາດ ແລະ ຄວາມພ້ອມທາງດ້ານເສດຖະກິດຂອງບັນດາປະເທດສະມາຊິກ.

**ຂ.** ການອະນຸຍາດໃຫ້ນາໄຊ້ມາດຕະການປົກປ້ອງເພື່ອຮອງຮັບກັບຄວາມບໍ່ໝັ້ນຄົງດ້ານເສດຖະກິດມະຫາພາກ ແລະ ຄວາມສ່ຽງທີ່ອາດເກີດຈາກຂະບວນການເປີດເສລີ, ລວມທັງໃຫ້ສິດນຳໃຊ້ມາດຕະການທີ່ຈຳເປັນເພື່ອຮັບປະກັນຄວາມໝັ້ນຄົງແກ່ເສດຖະກິດມະຫາພາກ.

**ຄ.** ຮັບປະກັນໃຫ້ທຸກໆປະເທດອາຊຽນໄດ້ຮັບຜົນປະໂຫຍດຮ່ວມກັນໃນການເປີດເສລີ.

**<u>ພາກການປະຕິບັດ:</u>**

- ລົບລ້າງ ຫລື ຫລຸດຜ່ອນຂໍ້ຈຳກັດ, ໃນເມື່ອເຫັນວ່າເໝາະສົມ ແລະ ມີຄວາມເປັນໄປໄດ້, ເພື່ອເອື້ອອຳນວຍໃຫ້ແກ່ການຊຳລະສະສາງ ແລະ ໂອນຍ້າຍ ສຳລັບບັນຊີເງິນຕາ.
- ລົບລ້າງ ຫລື ຫລຸດຜ່ອນຂໍ້ຈຳກັດ ຕໍ່ການໄຫລວຽນຂອງເງິນທຶນ, ໃນເມື່ອເຫັນວ່າເໝາະສົມ ແລະ ມີຄວາມເປັນໄປໄດ້, ແລະ ເປັນການລິ ເລີ່ມເພື່ອສົ່ງເສີມການພັດທະນາຕະຫລາດທຶນ.

## ກ.5. <u>ການໄຫລວຽນແບບເສລີຂອງແຮງງານທີ່ມີສີມື:</u>

**33.** ໃນການອະນຸຍາດສຳລັບການປະຕິບັດເຄື່ອນຍ້າຍ ຫລືອຳນວຍຄວາມສະດວກໃນການເຂົ້າມາ ສຳລັບບຸກຄົນທົ່ວໄປ ທີ່ດຳເນີນການຕິດພັນກັບການ

ຄ້າດ້ານຜະລິດຕະພັນ, ການບໍລິການ ແລະ ການລົງທຶນ, ໂດຍອີງຕາມ ລະບຽບການຂອງປະເທດຜູ້ຮັບ, ຊຶ່ງອາຊຽນກຳລັງດຳເນີນເພື່ອ:

<u>**ພາກການປະຕິບັດ:**</u>

- ອຳນວຍຄວາມສະດວກໃຫ້ແກ່ການອອກວີຊ່າເຂົ້າ-ອອກ ແລະ ການຜ່ານໄປມາຂອງຜູ້ອອກແຮງງານສຳລັບນັກວິຊາຊີບ ແລະ ແຮງງານທີ່ມີ ສີມື ຂອງອາຊຽນ, ຜູ້ທີ່ດຳເນີນການກ່ຽວຂ້ອງກັບການຄ້າຜ່ານແດນ ແລະ ບັນດາກິດຈະກຳທີ່ຕິດພັນກັບການລົງທຶນ.

**34.** ໃນການອຳນວຍຄວາມສະດວກໃຫ້ແກ່ການໄຫວວຽນຢ່າງເສລີດ້ານການ ບໍລິການ (ໃນປີ ***2015***), ອາຊຽນພວມສືບຕໍ່ດາເນີນການໃນດ້ານການສ້າງ ຄວາມກົມກຽວ ແລະ ດ້ານມາດຖານ, ເພື່ອແນໃສ່ອຳນວຍຄວາມສະດວກໃຫ້ ແກ່ການເຄື່ອນຍ້າຍຂອງແຮງງານທີ່ມີສີມືຢູ່ໃນຂົງເຂດ.

<u>**ພາກການປະຕິບັດ:**</u>

- ເພີ່ມທະວີການຮ່ວມມືລະຫວ່າງເຄືອຂ່າຍຂອງບັນດາສະມາຊິກມະຫາວິທະຍາໄລອາຊຽນ ***(AUN)*** ເພື່ອໃຫ້ການເຄື່ອນໄຫວຂອງນັກຮຽນ ແລະ ບຸກຄະລາກອນ ເພີ່ມຂຶ້ນຢູ່ໃນຂົງເຂດ;
- ພັດທະນາຄວາມອາດສາມາດທີ່ເປັນແກນນຳ ແລະ ຄຸນນະວຸດທິດ້ານ ວຽກງານ/ອາຊີບ ແລະ ສີມືຂອງຜູ້ຝຶກງານທີ່ຕ້ອງການນອນໃນຂະແໜງ ບູລິມະສິດດ້ານການບໍລິການ (ໃນປີ 2009); ແລະ ໃນຂະແໜງການບໍລິການອື່ນໆ (ນັບແຕ່ປີ 2010 ເຖິງ 2015); ແລະ
- ສ້າງຄວາມເຂັ້ມແຂງໃນວຽກງານການຄົ້ນຄວ້າວິໃຈຂອງແຕ່ລະປະເທດສະມາຊິກອາຊຽນໃນດ້ານການສົ່ງເສີມທັກສະ, ການຈັດວາງງານ, ແລະ ການພັດທະນາເຄືອຂ່າຍຂໍ້ມູນຂ່າວສານຂອງຕະຫລາດແຮງງານ ພາຍ ໃນປະເທດສະມາຊິກອາຊຽນ.

## ກ.6. <u>ຂະແໜງເຊື່ອມໂຍງບູລິມະສິດ:</u>

**35.** ໃນຂະນະທີ່ອາຊຽນມີຄວາມປະສົງທີ່ຈະເຊື່ອມໂຍງບັນດາຂະແໜງເສດຖະກິດໂດຍລວມນັ້ນ, ອາຊຽນໄດ້ຍອມຮັບວ່າຕ້ອງປະເຊີນກັບສິ່ງທ້າທາຍອັນຍິ່ງໃຫ່ຍຫລາຍປະການ. ໃນເບື້ອງຕົ້ນນີ້, ອາຊຽນໄດ້ສຸມຊັບພະຍາກອນຂອງຕົນໃສ່ການເຊື່ອມໂຍງຂະແໜງບູລິມະສິດຈຳນວນໃດໜຶ່ງ ເພື່ອຈະເປັນການກະຕຸກຊຸກຍູ້ໃຫ້ແກ່ການເຊື່ອມໂຍງເສດຖະກິດໂດຍລວມ.

**36.** 12 ຂະແໜງການເຊື່ອມໂຍງບູລິມະສິດໄດ້ຖືກກຳນົດອອກຢ່າງຈະແຈ້ງ ເພື່ອເລັ່ງໃຫ້ມີການເຊື່ອມໂຍງກັນທາງດ້ານເສດຖະກິດ. ບັນດາປະເທດສະມາຊິກທັງຫຼາຍຕ່າງກໍ່ໄດ້ໃຫ້ຄວາມສຳຄັນ ແລະ ເພີ່ມບົດບາດໃນການເປັນປະເທດຜູ້ປະສານງານຂອງແຕ່ລະຂະແໜງ. ແຕ່ລະຂະແໜງການເຊື່ອມໂຍງບູລິມະສິດແມ່ນມີແຜນຈັດຕັ້ງປະຕິບັດ, ຊຶ່ງປະສົມປະສານທັງຂໍ້ລິເລີ່ມທີ່ເປັນອັນສະເພາະຕາມແຕ່ລະຂະແໜງການ ແລະ ຂໍ້ລິເລີ່ມໂດຍລວມທີ່ຕິດພັນກັບທຸກຂະແໜງການເຊັ່ນວ່າ ມາດຕະການເພື່ອອຳນວຍຄວາມສະດວກທາງການຄ້າ.

**37.** ການຍົກສູງປະສິດຕິຜົນຂອງບັນດາຂະແໜງການຕົ້ນຕໍເຫຼົ່ານີ້ ແມ່ນຈະເຮັດໃຫ້ອາຊຽນສາມາດແຂ່ງຂັນທາງດ້ານຕົ້ນທຶນໄດ້, ແລະ ຮັກສາກິດຈະກຳເສດຖະກິດມູນຄ່າເພີ້ມ ແລະ ການຈ້າງງານໃນຂົງເຂດອີກດ້ວຍ. ການລິເລີ່ມຕາມຂະແໜງການນັ້ນ ຈະອະນຸຍາດໃຫ້ພາກພື້ນຊັບພະຍາກອນ ທີ່ມີຢູ່ຢ່າງຈຳກັດຂອງຕົນ ແກ່ການເຊື່ອມໂຍງທີ່ວ່ອງໄວແລະເລິກເຊິ່ງ ໃນຂົງເຂດຕ່າງໆ ທີ່ມີຄວາມຈຳເປັນອັນຮີບດ່ວນ ໃນຂະນະທີ່ເປີດໂອກາດໃຫ້ສະມາຊິກອາຊຽນໄດ້ມີໂອກາດສັງເກດການ ແລະ ແກ້ໄຂຜົນກະທົບຂອງການເຊື່ອມໂຍງ ແລະ ຮ່ວມກັນພັດທະນາດ້ານທັດສະນະວິໄສຂອງຂໍ້ຜູກມັດໃຫ້ເຂັ້ມແຂງແກ່ການເຊື່ອມໂຍງກັນທາງດ້ານເສດຖະກິດກ່ອນທີ່ ເວລາຈະລ່ວງເລີຍໄປ.

<u>**ພາກການປະຕິບັດ:**</u>

- ມີການທົບທວນຜົນການຈັດຕັ້ງປະຕິບັດ 2 ຄັ້ງ/ປີ ເພື່ອຕິດຕາມກວດ ກາສະພາບການ, ຄວາມຄືບໜ້າ ແລະ ປະສິດທິຜົນຂອງແຜນປະຕິບັດ ງານສຳລັບຂະແໜງການເຊື່ອມໂຍງບູລິມະສິດ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ໃຫ້ທັນຕາມກຳນົດເວລາ; ແລະ

- ນຳນິດໂຄງການສະເພາະຕາມຂະແໜງການຕ່າງໆ ຫຼື ຂໍ້ລິເລີ່ມໂດຍ ຜ່ານການ ສົນທະນາ ຫຼື ປຶກສາຫາລື ເປັນປົກກະຕິ ກັບຜູ້ມີສ່ວນຮ່ວມ ອື່ນໆ, ໂດຍສະ ເພາະແມ່ນພາກເອກະຊົນ.

ກ.7. **<u>ສະບຽງອາຫານ, ກະສິກຳ ແລະ ປ່າໄມ້</u>:**

**38.** ສົ່ງເສີມການຄ້າທັງພາຍໃນ ແລະ ພາຍນອກອາຊຽນ ແລະ ການແຂ່ງ ຂັນໃນໄລຍະ ຍາວນານ ທາງດ້ານອາຫານຂອງອາຊຽນ, ຜະລິດຕະພັນ/ ເຄື່ອງບໍລິໂພກກະສິກຳ ແລະ ປ່າໄມ້.

**<u>ພາກການປະຕິບັດ:</u>**

- ຕິດຕາມກວດກາການປະຕິບັດແຜນລຶບລ້າງອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມ ກັນ ເພື່ອສ້າງເຂດການຄ້າເສລີອາຊຽນ. ສຳລັບຜະລິດຕະພັນກະສິກຳ ແລະ ຜະລິດຕະພັນຈາກປ່າ.
- ພັດທະນາ ແລະ ນຳໃຊ້ລະບົບການຄຸ້ມຄອງຄຸນນະພາບດ້ານການປະ ມົງ ເພື່ອຮັບປະກັນຄວາມປອດໄພທາງດ້ານອາຫານ ແລະ ສົ່ງເສີມ ການແຂ່ງຂັນດ້ານຜະລິດຕະພັນການປະມົງຂອງອາຊຽນ ສູ່ຕະຫຼາດ ໂລກ ຜ່ານການຈັດຕັ້ງປະຕິບັດການກວດກາ ໂດຍອີງຕາມລະບົບການ ວິໄຈ ແລະ ຄຸ້ມຄອງສິ່ງທີ່ເປັນອັນຕະລາຍ ຫຼື ***(HACCP)*** ແລະ ປັບປຸງວຽກງານຫ້ອງທົດ ລອງ, ແລະ ປັບປຸງລະບົບການຄຸ້ມຄອງດ້ານຄຸນນະ ພາບ ແລະ ຄວາມປອດ ໄພ. ສະນັ້ນ, ລະບົບດັ່ງກ່າວແມ່ນຈະຖືກນຳໃຊ້ກັບວິສາຫະກິດຂະໜາດນ້ອຍ ໃນອາຊຽນ ໃນປີ 2009.
- ສ້າງຕັ້ງການປະຕິບັດດ້ານກະສິກຳ/ສັດນ້ຳທີ່ດີ ***(GAP)***, ການປະຕິບັດ ດ້ານການລ້ຽງສັດທີ່ດີ ***(GAHP)***, ການປະຕິບັດ ດ້ານສຸຂະອານາໄມທີ່ດີ ***(GHP)***, ການຜະລິດທີ່ດີ ***(GMP)***, ແລະ ນຳໃຊ້ລະບົບການວິໄຈ ແລະ ຄຸ້ມ ຄອງສິ່ງທີ່ເປັນອັນຕະລາຍ ***(HACCP)***; ສາລັບຜະລິດຕະ ພັນກະສິກຳ ແລະ ຜະລິດຕະພັນອາຫານທີ່ເປັນການຄ້າທີ່ສຳຄັນ/ທ່າແຮງທາງການຄ້າ ໃນປີ ***2012***.
- ສ້າງຄວາມກົມກຽວໃນຂັ້ນຕອນການກັກກັນ ແລະ ກວດກາ/ຊຸ່ມຕົວ ຢ່າງ ໃນປີ ***2010*** ແລະ ນຳໃຊ້ມາດຕະການສຸຂະອານາໄມພືດ ແລະ ສັດ ***(SPS)***

ສຳລັບຜະລິດຕະພັນກະສິກຳ, ອາຫານ, ແລະ ຜະລິດຕະ ພັນຈາກປ່າທີ່ເປັນການຄ້າທີ່ສຳຄັນ/ທ່າແຮງທາງດ້ານການຄ້າ. ໂດຍ ສອດຄ່ອງກັບມາດຖານ/ລະບຽບການສາກົນ ຫາກເຫັນວ່າເໝາະສົມ, ໃນປີ ***2015***.

- ສ້າງຄວາມກົມກຽວດ້ານປະລິມານຂໍ້ຈຳກັດສູງສຸດ ***(MRLs)*** ຂອງຢາປາບສັດຕູພືດທີ່ຖືກນຳໃຊ້ໂດຍທົ່ວໄປຢ່າງກວ້າງຂວາງ ສຳລັບການຄ້າຂາຍຜະລິດຕະພັນເມັດພືດພັນຕ່າງໆ ໂດຍໃຫ້ສອດຄ່ອງກັບມາດຖານ/ລະບຽບການຂອງສາກົນຖ້າເຫັນວ່າເໝາະສົມ, ໃນປີ ***2010***.
- ສ້າງຄວາມກົມກຽວທາງດ້ານລະບຽບການສຳລັບຜະລິດຕະພັນກະສິ ກຳທີ່ໄດ້ມາຈາກເຕັກໂນໂລຊີທາງຊີວະພາບທີ່ທັນສະໃໝໂດຍໃຫ້ສອດຄ່ອງກັບມາດຖານ/ລະບຽບການຂອງສາກົນ ຖ້າເຫັນວ່າເໝາະສົມ ໃນປີ ***2015***.
- ສ້າງຄວາມກົມກຽວດ້ານມາດຖານຄຸນນະພາບ ແລະ ຄວາມປອດໄພສຳລັບການປູກພືດ ແລະ ຜະລິດຕະພັນກະສິກຳທີ່ສຳຄັນທາງເສດຖະ ກິດໃນພາກພື້ນອາຊຽນ, ໃຫ້ສອດຄ່ອງກັບມາດຖານ/ລະບຽບການຂອງສາກົນ ຫາກເຫັນວ່າມີຄວາມເໝາະສົມ, ໃນປີ ***2015***.
- ສ້າງຄວາມກົມກຽວຄຸ້ມຄອງການກວດກາສຸຂະພາບຂອງສັດ (ລວມທັງສັດບົກ ແລະ ສັດນ້ຳ) ເພື່ອຄວາມປອດໄພດ້ານອາຫານຂອງສັດ ໂດຍ ຜ່ານການປະຕິບັດຕາມແຜນມາດຖານການຄຸ້ມຄອງ ຄວາມປອດໄພ ດ້ານຊີວະພັນໃຫ້ສອດຄ່ອງກັບມາດຖານ/ລະບຽບການ ຂອງສາກົນ ຫາກເຫັນວ່າມີຄວາມເໝາະສົມ, ໃນປີ ***2015***.
- ສ້າງຄວາມກົມກຽວດ້ານລະບຽບການນຳໃຊ້ເຄມີໃນການລ້ຽງສັດນ້ຳ ແລະ ມາດຕະການລົບລ້າງການນຳໃຊ້ທາດເຄມີທີ່ເປັນອັນຕະລາຍ ໃຫ້ສອດຄ່ອງຕາມມາດຖານ/ລະບຽບການຂອງສາກົນ ຫາກເຫັນວ່າມີຄວາມເໝາະສົມ, ໃນປີ ***2009***.
- ພັດທະນາກອບໜ້າວຽກສຳລັບພາກພື້ນເພື່ອໃຊ້ເປັນບ່ອນອີງ ວິທີປະ ຕິບັດ ແລະ ການດຳເນີນການ ຮັບຮອງ ຍັ້ງຍືນ ການຄຸ້ມຄອງປ່າໄມ້ ໃນປີ ***2015***.

**39.** ສົ່ງເສີມການຮ່ວມມື, ວິທີປະຕິບັດຮ່ວມ ແລະ ການຖ່າຍທອດເຕັກໂນໂລ ຊີ ລະຫ່ວາງປະເທດສະມາຊິກອາຊຽນດ້ວຍກັນ ແລະ ກັບສາກົນ, ອົງການຈັດຕັ້ງຕ່າງໆໃນພາກພື້ນ ແລະ ພາກເອກະຊົນ.

<u>**ພາກການປະຕິບັດ:**</u>

- ພັດທະນາແຜນຍຸດທະສາດຮ່ວມ/ທັດສະນະລວມກ່ຽວກັບປະເດັນກ່ຽວຂ້ອງຕ່າງໆ ທີ່ອາຊຽນໃຫ້ຄວາມສົນໃຈ ຕໍ່ກັບອົງການຈັດຕັ້ງສາກົນຕ່າງໆ ເຊັ່ນ: WTO, FAO, OIE, IPPC, CODEX, CITES ແລະ ກັບບັນດາປະເທດຄູ່ເຈລະຈາ;
- ສົ່ງເສີມການຮ່ວມມືຊ່ວຍເຫຼືອດ້ານການຄົ້ນຄວ້າວິໄຈແລະການຖ່າຍທອດເຕັກໂນໂລຊີໃນຂະແໜງກະສິກຳ, ອາຫານ ແລະ ຜະລິດຕະພັນຈາກປ່າ;
- ສ້າງຍຸດທະສາດຮ່ວມ ແລະ ວິທີປະຕິບັດຮ່ວມກັບພາກເອກະຊົນ ໃນການສົ່ງເສີມຄວາມປອດໄພດ້ານອາຫານ, ການລົງທຶນ ແລະ ສ້າງໂອ ກາດໃຫ້ມີການຮ່ວມທຸລະກິດ, ສົ່ງເສີມຜະລິດຕະພັນກະສິກຳ ແລະ ການເຂົ້າສູ່ຕະຫຼາດຂອງກັນແລະກັນ;
- ເພີ້ມຄວາມພະຍາຍາມເພື່ອຕໍ່ຕ້ານການຕັດໄມ້ທຳລາຍປ່າທີ່ຜິດກົດ ໝາຍ ແລະການຄ້າທີ່ຕິດພັນກັນ, ໄຟໄໝ້ປ່າ ແລະ ຜົນກະທົບຕ່າງໆທີ່ເກີດຂຶ້ນ; ແລະ
- ເພີ້ມຄວາມພະຍາຍາມເພື່ອຕໍ່ຕ້ານການປະມົງທີ່ຜິດກົດໝາຍ.

**40.** ສົ່ງເສີມການຮ່ວມມືດ້ານກະສິກຳອາຊຽນເພື່ອເພີ່ມອຳນາດ ແລະ ຂະຫຍາຍຕະຫຼາດຜະລິດຕະພັນກະສິກຳ, ເພື່ອສ້າງກົນໄກເຄືອຂ່າຍເຊື່ອມໂຍງການຮ່ວມມືດ້ານກະສິກຳ ແລະ ເພື່ອບັນລຸຈຸດປະສົງຂອງການຮ່ວມມືດ້ານກະສິກຳໃນການສ້າງຜົນປະໂຫຍດໃຫ້ກັບຊາວກະສິກອນໃນພາກ ພື້ນ.

<u>**ພາກການປະຕິບັດ:**</u>

- ຂະຫຍາຍຍຸດທະສາດການຮ່ວມມືລະຫວ່າງການຮ່ວມມືດ້ານກະສິກຳໃນອາຊຽນດ້ວຍຮູບການຮ່ວມມືແບບສອງຝ່າຍ, ລະດັບພາກພື້ນ ແລະ ການຮ່ວມມືແບບຫຼາຍຝ່າຍ;
- ສ້າງຕັ້ງລະບົບການເຊື່ອມໂຍງທຸລະກິດກັບບັນດາຫົວໜ່ວຍສະຫະກອນການກະເສດອາຊຽນ ທີ່ມີທ່າແຮງ; ແລະ
- ສົ່ງເສີມການລົງທຶນໂດຍກົງ ແລະ ຍຸດທະສາດຂອງຄູ່ຮ່ວມມືກັບຜູ້ ຜະລິດໃນສະຫະກອນກະເສດອາຊຽນ, ຜູ້ບໍລິໂພກ, ແລະ ຊາວຄ້າ ຂາຍ.

**ຂ. <u>ພາກພື້ນທີ່ສາມາດແຂ່ງຂັນທາງດ້ານເສດຖະກິດ</u>.**

**ຂ1. <u>ນະໂຍບາຍການແຂ່ງຂັນ</u>:**

**41.** ເປົ້າໝາຍຕົ້ນຕໍຂອງນະໂຍບາຍການແຂ່ງຂັນ ແມ່ນເພື່ອສົ່ງເສີມໃຫ້ມີວັດທະນະທຳຂອງການແຂ່ງຂັນທີ່ເປັນທຳ. ບັນດາສະຖາບັນ ແລະ ກົດໝາຍທີ່ຕິດພັນເຖິງນະໂຍບາຍການແຂ່ງຂັນໄດ້ຖືກສ້າງຂຶ້ນໃນຫວ່າງບໍ່ດົນມານີ້ໃນບາງປະເທດ (ບໍ່ແມ່ນທັງໝົດ) ສະມາຊິກອາຊຽນ (AMCs)[5]. ປະຈຸບັນ ອາຊຽນ ຍັງບໍ່ທັນມີໜ່ວຍງານຢ່າງເປັນທາງການທີ່ຮັບຜິດຊອບວຽກງານຮ່ວມມືດ້ານນະໂຍ ບາຍການແຂ່ງຂັນ ເພື່ອເປັນເຄືອຂ່າຍຕົວແທນດ້ານການແຂ່ງຂັນ ຫຼື ອີງກອນເພື່ອແລກປ່ຽນປະສົບການດ້ານນະໂຍບາຍ ແລະ ສະຖາບັນທີ່ເປັນເອກະລັກທາງດ້ານນະໂຍບາຍການແຂ່ງຂັນ.

**<u>ພາກການປະຕິບັດ</u>:**

- ພະຍາຍາມນຳສະເໜີນະໂຍບາຍດ້ານການແຂ່ງຂັນ ໃນທຸກປະເທດສະມາຊິກອາຊຽນໃນປີ ***2015***;

---

[5] ໃນປະຈຸບັນ, ມີພຽງແຕ່ປະເທດສະມາຊິກອາຊຽນ 4 ປະເທດ (ອິນໂດເນເຊຍ, ສິງກະໂປ,ໄທ, ແລະ ຫວຽດນາມ)ໄດ້ມີການແຂ່ງຂັນດ້ານກົດໝາຍຂອງຕົນ ແລະ ຮູບແບບການແຂ່ງຂັນດ້ານລະບຽບການຕ່າງໆ. ມາເລເຊຍມີກົດໝາຍ ການແຂ່ງຂັນແຕ່ຍັງບໍ່ທັນຜ່ານລະດັບຊາດເທື່ອ, ສະນັ້ນຈິ່ງໄດ້ອີງຕາມລະບຽບ ການຕ່າງໆ ຂອງແຕ່ລະຂັ້ນຂະແໜງການ ເພື່ອໃຫ້ແນ່ໃຈ ແລະ ເປັນຂໍ້ບັງຄັບ ດ້ານການແຂ່ງຂັນຕະຫຼາດ.

- ສ້າງຕັ້ງເຄືອຂ່າຍອົງການ ຫຼື ໜ່ວຍງານທີ່ຮັບຜິດຊອບດ້ານນະໂຍບາຍການແຂ່ງຂັນ ເພື່ອເປັນເວທີສົນທະນາ ແລະ ເປັນໜ່ວຍປະສານງານດ້ານນະໂຍບາຍການແຂ່ງຂັນ;
- ສົ່ງເສີມໃຫ້ມີໂຄງການ/ກິດຈະກຳສ້າງຄວາມເຂັ້ມແຂງ ສຳລັບປະເທດສະມາຊິກອາຊຽນໃນການພັດທະນານະໂຍບາຍການແຂ່ງຂັນແຫ່ງຊາດ; ແລະ
- ພັດທະນາລະບຽບການພາກພື້ນກ່ຽວກັບນະໂຍບາຍການແຂ່ງຂັນ ໃນ ປີ 2010, ອີງຕາມບົດຮຽນຕົວຈິງຂອງແຕ່ລະປະເທດ ແລະ ບົດຮຽນຕົວຈິງອັນດີຂອງສາກົນກັບແນວຄິດການສ້າງສະພາບແວດລ້ອມການແຂ່ງຂັນທີ່ເປັນທຳ.

## ຂ.2. ການປົກປ້ອງຜູ້ບໍລິໂພກ:

42. ການສ້າງການເຊື່ອມໂຍງເສດຖະກິດພາກພື້ນໂດຍຮັບໃຊ້ໃຫ້ແກ່ປະຊາຊົນຂອງພາກພື້ນ ເປັນເປົ້າໝາຍໃຈກາງເຮັດໃຫ້ອາຊຽນມີຄວາມສຳນຶກສະເໝີ ວ່າຜູ້ບໍລິໂພກບໍ່ສາມາດຕັດແຍກອອກຈາກມາດຕະການທັງໝົດທີ່ຈະເຮັດໃຫ້ການເຊື່ອມໂຍງເສດຖະກິດດັ່ງກ່າວບັນລຸເປົ້າໝາຍ. ມາດຕະການປົກປ້ອງຜູ້ບໍລິໂພກກໍ່ໄດ້ຮັບການພັດທະນາມາຄຽງຄູ່ກັບການສ້າງມາດຕະການທາງດ້ານເສດຖະກິດດັ່ງກ່າວ ເພື່ອເນັ້ນໃສ່ແກ້ໄຂບັນຫາການປົກປ້ອງຜູ້ບໍລິໂພກທີ່ນັບມື້ ນັບພົ້ນເດັ່ນ.

<u>**ພາກການປະຕິບັດ:**</u>

- ສ້າງຄວາມເຂັ້ມແຂງດ້ານການປົກປ້ອງຜູ້ບໍລິໂພກໂດຍສ້າງຕັ້ງຄະນະກຳມະການປະສານງານອາຊຽນ ດ້ານການປົກປ້ອງຜູ້ບໍລິໂພກ *(ACCCP)*;
- ສ້າງຕັ້ງເຄືອຂ່າຍອົງກອນປົກປ້ອງຜູ້ບໍລິໂພກເພື່ອອຳນວຍຄວາມສະ ດວກໃນການແລກປ່ຽນ ແລະ ໃຫ້ຂໍ້ມູນຂ່າວສານ; ແລະ

- ຈັດຝຶກອົບຮົມລະດັບພາກພື້ນໃຫ້ກັບພະນັກງານລັດທີ່ຮັບຜິດຊອບດ້ານ ການປົກປ້ອງຜູ້ບໍລິໂພກ ແລະ ຜູ້ບໍລິໂພກຊັ້ນນໍາ ເພື່ອກະກຽມໃຫ້ແກ່ ການເຊື່ອມໂຍງຕະຫຼາດອາຊຽນ.

**ຂ.3. <u>ສິດທິດ້ານຊັບສິນທາງປັນຍາ</u>:**

**43.** ໂດຍຫຼັກການແລ້ວ, ນະໂຍບາຍຊັບສິນທາງປັນຍາ ສາມາດເປັນແມ່ແຮງຊຸກຍູ້ຢ່າງໃຫຍ່ຫຼວງໃຫ້ກັບ (ກ) ວັດທະນະທໍາ, ສິ່ງປະດິດສ້າງທາງປັນຍາ ແລະ ວັນນະກໍາ ແລະ ຄວາມໝາຍທາງດ້ານການຄ້າໃນຕົວຂອງມັນເອງ; (ຂ) ຮັບ ຮອງຢ່າງມີປະສິດທິຜົນ ແລະ ດັດປັບດ້ານເຕັກໂນໂລຊີທີ່ກ້າວໜ້າຂຶ້ນ; ແລະ (ຄ) ສືບຕໍ່ຖອດຖອນບົດຮຽນ ເພື່ອສາມາດຮັບມືກັບສະພາບການອັນໃໝ່ທີ່ ອາດເກີດຂຶ້ນ.

**44.** ນະໂຍບາຍຊັບສິນທາງປັນຍາຍັງສາມາດຊ່ວຍໃຫ້ຄວບຄຸມຄວາມບ່າຍບ່ຽງຂອງວັດທະນະທໍາ, ຂອງການປະດິດສ້າງ, ແລະ ເພື່ອຮັບປະກັນໃຫ້ມີການເຂົ້າຫາຢ່າງເທົ່າທຽມກວ່າ ແລະ ນໍາຜົນປະໂຫຍດມາສູ່ຜູ້ປະກອບການທັງໝົດໃນຊັບສິນທາງປັນຍາທີ່ສືບທອດມານໍາປະເພນີ ແລະ ສິ່ງທີ່ພັດທະນາຂຶ້ນ ມາໃໝ່. ນອກນັ້ນ, ນະໂຍບາຍຊັບສິນທາງປັນຍາຍັງມີອິດທິພົນຕໍ່ປະລິມານ ແລະ ຄຸນນະພາບຂອງການຄ້າກັບພາຍນອກ ແລະ ການລົງທຶນ ແລະ ການ ຖ່າຍທອດເຕັກໂນໂລຊີສະເພາະໃນລະດັບທີ່ນໍາໜ້າ. ການປະດິດສ້າງຊັບສິນ ທາງປັນຍາແມ່ນຕົວກໍານົດຫຼັກຂອງມູນຄ່າເພີ່ມຜົນຜະລິດຂອງທ້ອງຖິ່ນ ແລະ ການແຂ່ງຂັນກັບພາຍນອກ.

**45.** ການຮ່ວມມືລະດັບພາກພື້ນໃນດ້ານ IPR: ໄດ້ມີແຜນພັດທະນາສິດທິ ດ້ານຊັບສິນທາງປັນຍາຂອງອາຊຽນແຕ່ປີ 2004-2010 ແລະ ແຜນວຽກຂອງການຮ່ວມມືອາຊຽນກ່ຽວກັບສິດທິໃນການຄັດເລືອກ ຊຶ່ງແນໃສ່ການພັດທະນາດ້ານວັດທະນະທໍາການຮຽນຮູ້ ແລະ ການປະຕິຮູບທີ່ໄດ້ຮັບການສະໜັບສະໜູນໂດຍອີງກອນ IP ທີ່ຖືກຕ້ອງ ເປັນທໍາ ຕໍ່ຫົວໜ່ວຍທຸລະກິດ, ນັກລົງທຶນ, ແລະ

ນັກປະດິດສ້າງໃນອາຊຽນ. ນອກນັ້ນ, ແຜນການດັ່ງກ່າວກໍ່ໄດ້ຖືກອອກ ແບບມາເພື່ອເພີ່ມທະວີຄວາມຮັບຮູ້ໃນດ້ານ ດັ່ງກ່າວໃຫ້ແກ່ຊຸມຊົນໃຫ້ຫຼາຍ ຂຶ້ນ, ການປະສານງານ ແລະ ລະບົບເຄືອຂ່າຍສາມາດຄາດຄະເນໄດ້, ການສ້າງຄວາມອາດສາມາດ, ແລະ ການສະໜັບສະໜູນໃຫ້ອຸດສາຫະກໍາດ້ານ IP ມີການແຂ່ງຂັນ ແລະ ການພັດທະນາ.

**<u>ພາກການປະຕິບັດ:</u>**

- ຈັດຕັ້ງປະຕິບັດແຜນພັດທະນາ IPR ຂອງອາຊຽນ 2004-2010 ຢ່າງເຕັມສ່ວນ, ແລະ ແຜນງານສໍາລັບການຮ່ວມມືອາຊຽນດ້ານສິດທິໃນການຄັດລອກ;
- ສ້າງຕັ້ງລະບົບຖານຂໍ້ມູນອາຊຽນເພື່ອອໍານວຍຄວາມສະດວກ ໃນການຈັດເກັບຂໍ້ມູນໃຫ້ແກ່ຜູ້ບໍລິໂພກ ແລະ ສົ່ງເສີມລະບົບການປະ ສານງານລະຫວ່າງຫ້ອງການ IP ໃນປະເທດສະມາຊິກອາຊຽນ ຊຶ່ງເປັນຫ້ອງການສູນຮັບຂໍ້ມູນ, ໂດຍນໍາໃຊ້ພາສາໃດໜຶ່ງຕາມຄວາມເໝາະສົມເພື່ອສະດວກ ໃຫ້ແກ່ການ ນໍາໃຊ້.
- ສາມາດນໍາໃຊ້ອະນຸສັນຍາ ມາດຣິດ ຕາມຄວາມເໝາະສົມ;
- ໃຫ້ມີການຫາລືກັນຢ່າງສະໝໍ່າສະເໝີ ແລະ ແລກປ່ຽນຂໍ້ມູນດ້ວຍກັນລະຫວ່າງໜ່ວຍງານບັງຄັບໃຊ້ກົດໝາຍການປົກປ້ອງ IP ລະດັບ ຊາດ; ແລະ
- ສົ່ງເສີມການຮ່ວມມືລະດັບພາກພື້ນກ່ຽວກັບຄວາມຮູ້ທີ່ສືບທອດມາຕາມປະເພນີ, ບໍ່ກໍາເນີດສືບສາຍເຜົ່າພັນ ແລະ ວິທີການສະແດງອອກດ້ານວັດທະນະທໍາຮີດຄອງປະເພນີ.

## ຂ.4. <u>ການພັດທະນາພື້ນຖານໂຄງລ່າງ:</u>

**46.** ການຮ່ວມມືທາງດ້ານການຂົນສົ່ງ: ເຄືອຄ່າຍການເຊື່ອມໂຍງລະບົບການຂົນສົ່ງທີ່ຮັບປະກັນ ແລະ ມີປະສິດທິຜົນ ແມ່ນສິ່ງສຳຄັນທີ່ສຸດທີ່ຊ່ວຍໃຫ້ການສ້າງເຂດການຄ້າເສລີອາຊຽນ ເກີດມີໝາກຜົນຢ່າງເປັນຈິງ ຕະຫຼອດເຖິງການເພີ່ມທະວີດຶງດູດໃຫ້ກັບພາກພື້ນທີ່ເປັນຖານການຜະລິດອັນໜຶ່ງດຽວ, ເປັນເຂດທ່ອງທ່ຽວ ແລະ ເຂດການລົງທຶນ ແລະ ການລົດຊ່ອງຫວ່າງຄວາມແຕກໂຕນກັນດ້ານລະດັບການພັດທະນາ. ການຂົນສົ່ງອາຊຽນຍັງເປັນສ່ວນສຳຄັນໃນການເຊື່ອມໂຍງອາຊຽນກັບບັນດາປະເທດໃກ້ຄຽງ ແຖບທາງຕາເວັນອອກສ່ຽງ ເໜືອ ແລະ ອາຊີໃຕ້.

**47.** ຄວາມພະຍາຍາມຂອງພາກພື້ນໄດ້ມີການສົ່ງເສີມການອານວຍຄວາມສະດວກດ້ານການຂົນສົ່ງ ແລະ ພາລາທິການໆຈັດສົ່ງ, ສົ່ງເສີມພື້ນຖານໂຄງການການເຊື່ອມໂຍງ ແລະ ການເຊື່ອມຕໍ່ຂອງການຂົນສົ່ງຫຼາຍຮູບແບບ ອໍານວຍຄວາມສະດວກການຂົນສົ່ງ ແລະ ການເຊື່ອມໂຍງການທ່ອງທ່ຽວ ແລະ ໃນຂັ້ນຕອນຕໍ່ໄປຈະມີການເປີດກ້ວາງຂະແໜງການຂົນສົ່ງທາງອາກາດ ແລະ ທາງ ທະເລ. ສາມາດສ້າງຂອບວຽກເພື່ອເປີດກ້ວາງຢ່າງເຕັມສ່ວນຂອງການບໍລິການທາງອາກາດໃນອາຊຽນ ຈະຕ້ອງໄດ້ຈັດຕັ້ງປະຕິບັດຢ່າງເລັ່ງດ່ວນ.

**48.** ການຂົນສົ່ງຫຼາຍຮູບແບບ ແລະ ການອໍານວຍຄວາມສະດວກດ້ານການ ຂົນສົ່ງ. ແຜນປະຕິບັດງານດ້ານການຂົນສົ່ງອາຊຽນ 2005-2010 ກວມເອົາການຂົນສົ່ງທາງທະເລ, ທາງບົກ ແລະ ທາງອາກາດ, ແລະ ການອໍານວຍຄວາມສະດວກດ້ານດ້ານຂົນສົ່ງ. ແຜນການປະກອບດ້ວຍ 48 ມາດຕະການ.

<u>**ພາກການປະຕິບັດ:**</u>

- ຈັດຕັ້ງສັນຍາຂອບອາຊຽນວ່າດ້ວຍການອໍານວຍຄວາມສະດວກ ໃຫ້ແກ່ການຂົນສົ່ງສິນຄ້າຜ່ານແດນ ໃນປີ 2009;
- ຈັດຕັ້ງປະຕິບັດສັນຍາຂອບອາຊຽນ ວ່າດ້ວຍການຂົນສົ່ງຫຼາຍຮູບແບບ ໃນປີ 2010;

- ສຳລັບຂອບສັນຍາອາຊຽນວ່າດ້ວຍການອຳນວຍຄວາມສະດວກດ້ານການຂົນສົ່ງລະຫວ່າງລັດຕໍ່ລັດ ໃນປີ 2008 ເພື່ອລິເລີ່ມຈັດຕັ້ງປະຕິບັດ ໃນປີ 2010.

**49.** <u>ການຂົນສົ່ງທາງບົກ</u>: ໂຄງການບູລິມະສິດແມ່ນໃຫ້ສຳເລັດໂຄງການກໍ່ສ້າງເຊື່ອມໂຍງທາງລົດໄຟ ລະຫວ່າງ ສິງກະໂປ-ຄຸນໝິງ ແລະ ໂຄງການຕາໜ່າງທາງຫຼວງອາຊຽນ.

**<u>ພາກການປະຕິບັດ:</u>**

- ສຳເລັດການພັດທະນາທຸກໆເສັ້ນທາງທີ່ເຊື່ອມຕໍ່ກັບເສັ້ນທາງລົດໄຟ ສິງ ກະໂປ-ຄຸນໝິງ;
- ສຳເລັດການຈັດຕັ້ງປະຕິບັດໂຄງການເສັ້ນທາງຫຼວງອາຊຽນ ໂດຍສະ ເພາະການກໍ່ສ້າງເສັ້ນທາງ/ປັບປຸງເສັ້ນທາງທີ່ມີມາດຖານຕໍ່າກວ່າລະ ດັບ 3 (ເຮັດເປັນ 2 ເລນ ປູຢາງສອງຊັ້ນ) ແລະ ກຳນົດໃຫ້ເປັນເສັ້ນທາງ ຫຼວງຂົນສົ່ງຜ່ານແດນອາຊຽນ; ແລະ
- ສົ່ງເສີມໃຫ້ມີຄວາມປອດໄພຕາມທ້ອງຖະໜົນໃນອາຊຽນ.

**50.** ການຂົນສົ່ງທາງທະເລ ແລະ ທາງອາກາດ. ຮັບຮອງເອົາລະບຽບຫຼັກການ ລວມ ແລະ ກອບວຽກກ່ຽວກັບນະໂຍບາຍການຂົນສົ່ງສິນຄ້າອັນໜຶ່ງດຽວ ແລະ ພັດທະນາ ແລະ ຈັດຕັ້ງປະຕິບັດຕະຫຼາດການຂົນສົ່ງທາງອາກາດອາຊຽນໜຶ່ງ ດຽວ.

**<u>ພາກການປະຕິບັດ:</u>**

- ຈັດຕັ້ງປະຕິບັດສັນຍາສາກົນວ່າດ້ວຍການຂົນສົ່ງທາງທະເລ (IMO);
- ຈັດຕັ້ງປະຕິບັດແຜນວຽກກ່ຽວກັບການເຊື່ອມໂຍງດ້ານການຂົນສົ່ງ ແລະ ການຂົນສົ່ງທາງທະເລທີ່ມີການແຂ່ງຂັນໃນອາຊຽນ;
- ຈັດຕັ້ງປະຕິບັດນະໂຍບາຍການເປີດນ່ານຟ້າອາຊຽນ (ແຜນສຳລັບເຊື່ອມໂຍງຂະແໜງການເດີນທາງໆອາກາດ);

- ຈັດຕັ້ງປະຕິບັດ ຕະຫຼາດການບິນຈຸດດຽວຂອງອາຊຽນ.

**51.** ລະບົບໂຄງລ່າງດ້ານຂໍ້ມູນຂ່າວສານ. ຮັບປະກັນ ແລະ ເຊື່ອມຕໍ່ລະບົບໂຄງລ່າງພື້ນຖານດ້ານຂໍ້ມູນຂ່າວສານ ແມ່ນສຳຄັນ ເພື່ອຄົງໄວ້ຊຶ່ງລະດັບການຂະຫຍາຍຕົວດ້ານເສດຖະກິດຂອງພາກພື້ນ ແລະ ຄວາມສາມາດໃນການແຂ່ງ ຂັນ. ຄວາມພະຍາຍາມດັ່ງກ່າວໄດ້ມີຂຶ້ນເພື່ອອຳນວຍຄວາມສະດວກແກ່ການ ເຊື່ອມຕໍ່ ແລະ ເຕັກນິກການປະຕິບັດງານດ້ວຍລະບົບເຕັກໂນໂລຊີຂໍ້ມູນຂ່າວ ສານ, ເປັນໄມ້ງັດໃຫ້ແກ່ລະບົບເຄືອຂ່າຍແຫ່ງຊາດ ທີ່ມີໃນປະຈຸບັນ ແລະ ພັດທະນາໃຫ້ເປັນລະບົບໂຄງລ່າງພື້ນຖານດ້ານຂໍ້ມູນຂ່າວສານຂອງພາກພື້ນ. ໃຫ້ຄວາມສຳຄັນເທົ່າທຽມກັນເພື່ອເສີມສ້າງຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈ ໃນການນຳໃຊ້ອິນເຕີເນັດ ແລະ ຄວາມປອດໄພໃນການໂອນຖ່າຍຜ່ານລະບົບອິເລັກໂຕຼນິກ, ການຈ່າຍ ແລະ ການຊຳລະຕ່າງໆ.

**52.** ພັດທະນາການເຊື່ອມຕໍ່ລະຫວ່າງປະເທດດ້ວຍຄວາມໄວສູງກັບລະບົບໂຄງລ່າງຂໍ້ມູນຂ່າວສານກັບທຸກຊາດ.

**<u>ພາກການປະຕິບັດ:</u>**

- ອຳນວຍຄວາມສະດວກແກ່ລະບົບການຕິດຕໍ່ທີ່ມີຄວາມໄວສູງກັບລະບົບໂຄງລ່າງຂໍ້ມູນຂ່າວສານກັບທຸກຊາດ ໃນປີ 2010 ແລະ ຈັດຕັ້ງປະຕິບັດມາດຕະການດ້ານ ICT ທີ່ໄດ້ກຳນົດໄວ້ໃນແຜນປະຕິບັດງານວຽງຈັນ (VAP);
- ເພີ່ມທະວີການສ້າງຄວາມອາດສາມາດ ແລະ ໂຄງການຝຶກອົບຮົມໃຫ້ທີມງານຮັບຜິດຊອບລະບົບຄອມພິວເຕີສຸກເສີນແຫ່ງຊາດ (CERTs) ແລະ ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດ, ການຮ່ວມມື ແລະ ກວມເອົາລະບົບເຄືອຂ່າຍຄວາມປອດໄພດ້ານຂໍ້ມູນທາງຄອມພິວເຕີຂອງພາກພື້ນ, ລວມທັງຂະຫຍາຍລະບົບຄອບມພິວເຕີສຸກເສີນແຫ່ງຊາດອາຊຽນ ໂດຍມີການແລກປ່ຽນການຝຶກອົບຮົມດ້ານວິຊາການ ກັບບັນດາປະເທດຄູ່ເຈລະຈາອາຊຽນໃນປີ 2007;

- ສົ່ງເສີມໃຫ້ມີສ່ວນຮ່ວມຈາກຜູ້ປະກອບການທັງໝົດ (ບຸກຄົນທົ່ວໄປ, ຊຸມຊົນ, ວິສາຫະກິດ ແລະ ໜ່ວຍງານຄຸ້ມຄອງພາກລັດ) ໃນການນໍາໃຊ້ ແລະ ພັດທະນາການໝູນໃຊ້ ICT ແລະ ການບໍລິການກ່ຽວກັບໂຄງລ່າງດ້ານຂໍ້ມູນຂ່າວສານຂອງພາກພື້ນ;
- ສະໜັບສະໜູນການນໍາໃຊ້ຂະແໜງການ ICT (ໃນເບື້ອງຕົ້ນໃຊ້ຢູ່ໃນຂະແໜງການຫຼັກໆເປັນຕົ້ນ ໃນຂົງເຂດພາສີ, ພາລາທິການ (Logistics), ການຂົນສົ່ງ, ອຸດສາຫະກໍາການຫຸ້ມຫໍ່ບັນຈຸ) ເພື່ອປັບປຸງປະສິດທິພາບ ແລະ ຜະລິດຕະພາບ; ແລະ
- ຂະຫຍາຍຈໍານວນປະເທດສະມາຊິກອາຊຽນໃນການເຂົ້າຮ່ວມຮັບຮູ້ເຊິ່ງ ກັນ ແລະ ກັນອາຊຽນ (MRA) ສໍາລັບອຸປະກອນທາງດ້ານໂທລະຄົມ ມະນາຄົມ; ແລະ
- ສ້າງຕາໜ່າງດ້ານລະບຽບກົດໝາຍ ແລະ ນະໂຍບາຍຂອງພາກພື້ນໃຫ້ເລິກເຊິ່ງເພື່ອຮັບມືກັບກາລະໂອກາດ ແລະ ສິ່ງທ້າທາຍໃນຂົງເຂດລະບົບເຄືອຂ່າຍຂອງລຸ້ນຕໍ່ໄປໃນອານາຄົດ, ລວມທັງລະບົບການຈັດການລະຫວ່າງປະເທດ ທາງດ້ານຜະລິດຕະພັນ/ການບໍລິການ, ລະບົບຂໍ້ມູນຂ່າວສານ ແລະ ເຄືອຂ່າຍໃນສະພາວະທີ່ເປັນລະບົບທີ່ເຊື່ອມເຂົ້າ ຫາກັນ.

**53.** ການຮ່ວມມືດ້ານພະລັງງານ. ຮັບປະກັນ ແລະ ສະໜອງພະລັງງານ ຢ່າງ ພຽງພໍລວມທັງນໍ້າມັນຊີວະພາບ ແມ່ນສິ່ງສໍາຄັນຕົ້ນຕໍເພື່ອສະໜັບສະໜູນໃຫ້ແກ່ເສດຖະກິດທີ່ຍືນຍົງ ແລະກິດຈະກໍາການເຄື່ອນໄຫວຂອງອຸດສາຫະກໍາ. ການຮ່ວມມືລະດັບພາກພື້ນ ໃນໂຄງການທໍ່ສົ່ງອາຍແກັດ ອາຊຽນ (TAGP) ແລະ ໂຄງການສາຍສົ່ງກະແສໄຟຟ້າອາຊຽນ (APG) ມີຄວາມສົມສ່ວນກັບປະລິມານຊັບພະຍາກອນພະລັງງານ ຂອງພາກພື້ນ ເພື່ອໃຫ້ມີຄວາມປອດໄພສູງ ຂຶ້ນ. ໂຄງການເຫຼົ່ານີ້ ຍັງສ້າງໂອກາດໃຫ້ກັບພາກເອກະຊົນ ເຂົ້າມາມີສ່ວນຮ່ວມໃນດ້ານການລົງທຶນ, ລວມທັງດ້ານການເງິນ, ແລະ ການຖ່າຍທອດເຕັກ ໂນໂລຊີ.

ລະບົບການເຊື່ອມຕໍ່ສາຍສົ່ງກະແສໄຟຟ້າແຮງສູງ ແລະ ທໍ່ສົ່ງອາຍ ແກັດ ສ້າງຜົນປະໂຫຍດອັນສໍາຄັນໃນດ້ານຄວາມປອດໄພ, ການມີຂໍ້ໂຍະຍານ ແລະ ຄຸນນະພາບຂອງການສະໜອງພະລັງງານ.

**54.** ເລັ່ງລັດການພັດທະນາໂຄງການເຊື່ອມຕໍ່ລະບົບສາຍສົ່ງກະແສໄຟຟ້າແຮງ ສູງ ແລະ ທໍ່ສົ່ງອາຍແກັດອາຊຽນ. ແຜນພັດທະນາລະບົບສາຍສົ່ງກະແສໄຟຟ້າແຮງສູງອາຊຽນທີ່ຕິດພັນກັບ 14 ໂຄງການເຊື່ອມຕໍ່ໄຟຟ້າ ແລະ ແຜນພັດທະ ນາທໍ່ສົ່ງອາຍແກັດອາຊຽນທີ່ຕິດພັນກັບ 7 ໂຄງການທໍ່ສົ່ງອາຍແກັດ.

**<u>ພາກການປະຕິບັດ:</u>**

- ເລັ່ງລັດການຈັດຕັ້ງປະຕິບັດແຜນພັດທະນາລະບົບສາຍສົ່ງກະແສໄຟຟ້າ ແຮງສູງ ແລະ ທໍ່ສົ່ງອາຍ ແກັດອາຊຽນ;
- ສົ່ງເສີມໃຫ້ມີສ່ວນຮ່ວມຂອງພາກເອກະຊົນ ໃຫ້ຫຼາຍຂຶ້ນໃນແຜນພັດທະ ນາລະບົບສາຍສົ່ງກະແສໄຟຟ້າແຮງສູງ ແລະ ທໍ່ສົ່ງອາຍແກັດອາຊຽນ.
- ໃຫ້ສໍາເລັດສັນຍາວ່າດ້ວຍຄວາມໝັ້ນຄົງພະລັງງານເຊື້ອໄຟ ເພື່ອເສີມຂະຫຍາຍຄວາມໝັ້ນຄົງນໍ້າມັນເຊື້ອໄຟ ແລະ ອາຍແກັດໃນພາກພື້ນ; ແລະ

**55.** ໃນຂະນະທີ່ອາຊຽນພະຍາຍາມໃນການເລັ່ງລັດການສ້າງຕັ້ງປະຊາຄົມອາ ຊຽນໃຫ້ສໍາເລັດ ໃນປີ 2015, ຈຶ່ງມີຄວາມສໍາຄັນເພື່ອຮັບປະກັນວ່າ ການພັດທະນາດັ່ງກ່າວນັ້ນຍືນຍົງຕະຫຼອດໄປ, ຊຶ່ງໃນນັ້ນກໍ່ລວມເຖິງການຫຼຸດຜ່ອນອາຍຮ້ອນທີ່ເກີດຈາກເຮືອນແກ້ວ, ໂດຍນໍາໃຊ້ນະໂຍບາຍ ແລະ ມາດຕະການທີ່ມີປະສິດທິຜົນ, ຊຶ່ງຈະເປັນການປະກອບສ່ວນໃນການຫຼຸດຜ່ອນການປ່ຽນແປງອຸນນະພູມຂອງໂລກ. ຮັບຮູ້ເຖິງຄວາມຈໍາກັດທາງດ້ານຊັບພະຍາກອນດ້ານພະລັງງານຂອງໂລກ ແລະ ຄວາມບໍ່ແນ່ນອນທາງດ້ານລາຄາຂອງນໍ້າມັນເຊື້ອໄຟ, ເຊິ່ງເປັນປະເດັນຕົ້ນຕໍສໍາລັບອາຊຽນ ທີ່ຕ້ອງເນັ້ນໜັກເຖິງຄວາມຈໍາເປັນໃນ ການເສີມຂະຫຍາຍການພັດທະນາພະລັງງານທີ່ຜະລິດຂຶ້ນໃໝ່ ເຊັ່ນວ່າ : ນ້ໍາມັນເຊື້ອໄຟຊີວະພາບ, ລວມທັງການສົ່ງເສີມການເປີດຂະແໜງການຄ້າ, ການ

ອຳນວຍຄວາມສະດວກ ແລະ ການຮ່ວມມືໃນຂະແໜງພະລັງງານທີ່ຜະລິດຂຶ້ນ ໃໝ່ ແລະ ອຸດສາຫະກຳຕ່າງໆ ທີ່ຕິດພັນກັບຂະແໜງການດັ່ງກ່າວ ລວມທັງ ຂະແໜງການລົງທຶນໃສ່ໂຄງລ່າງພື້ນຖານທີ່ຈຳເປັນສຳລັບການພັດທະນາຂະ ແໜງພະລັງງານທີ່ຜະລິດຂຶ້ນໃໝ່.

**56.** ການຮ່ວມມືດ້ານບໍ່ແຮ່: ເພີ່ມທະວີດ້ານການຄ້າ ແລະ ການລົງທຶນ ແລະ ສ້າງຄວາມເຂັ້ມແຂງດ້ານການຮ່ວມມື ແລະ ສ້າງຄວາມອາດສາມາດໃນຂະແໜງທໍລະນີວິທະຍາ ແລະ ບໍ່ແຮ່ເພື່ອເຮັດໃຫ້ການພັດທະນາຂະແໜງບໍ່ແຮ່ ມີຄວາມຍືນຍົງໃນພາກພື້ນອາຊຽນ.

**<u>ພາກການປະຕິບັດ:</u>**

- ອຳນວຍຄວາມສະດວກ ແລະ ສົ່ງເສີມການຄ້າ ແລະ ການລົງທຶນ ໃນຂະແໜງບໍ່ແຮ່;
- ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ແລະ ການສ້າງຊັບພະຍາກອນ ມະນຸດດ້ານທໍລະນີວິທະຍາ ແລະ ຂະແໜງການບໍ່ແຮ່ອາຊຽນ;
- ສົ່ງເສີມການພັດທະນາສະພາບແວດລ້ອມ ແລະ ສັງຄົມແບບຍືນຍົງໃນຂະແໜງບໍ່ແຮ່; ແລະ
- ຊຸກຍູ້ໃຫ້ມີສ່ວນຮ່ວມຂອງພາກເອກະຊົນ ໃນການພັດທະນາຂະແໜງ ບໍ່ແຮ່.

**57.** ການໃຊ້ຈ່າຍເຂົ້າໃນໂຄງການພັດທະນາໂຄງລ່າງ. ຮັບຮູ້ວ່າການໃຊ້ຈ່າຍມີຄວາມສຳຄັນ ຕໍ່ການປະກອບສ່ວນໃນການກະຕຸ້ນໃຫ້ມີການເຕີບໂຕດ້ານເສດຖະກິດ. ໃນຂະນະທີ່ອາຊຽນໄດ້ພະຍາຍາມເລັ່ງລັດການເຊື່ອມໂຍງເສດຖະກິດຂອງຕົນ, ຈຶ່ງຈຳເປັນຕ້ອງມີການລົງທຶນຂະໜາດໃຫຍ່ ໂດຍສະເພາະການພັດທະນາພື້ນຖານໂຄງລ່າງຂອງພາກພື້ນ. ເອົາແຜນການໃຊ້ຈ່າຍເຂົ້າໃສ່ການພັດທະນາໂຄງລ່າງເພື່ອດູດດຶງໃຫ້ພາກເອກະຊົນເຂົ້າມາມີສ່ວນຮ່ວມຢ່າງຫຼວງຫຼາຍ. ດັ່ງນັ້ນ, ຈຶ່ງເຫັນວ່າເປັນສິ່ງສາຄັນ.

**<u>ພາກການປະຕິບັດ:</u>**

- ສົ່ງເສີມໃຫ້ພາກເອກະຊົນ ແລະ ອົງການຈັດຕັ້ງສາກົນມີສ່ວນຮ່ວມຢ່າງເຂັ້ມແຂງໃນການລົງທຶນເຂົ້າໃນໂຄງການພັດທະນາໂຄງລ່າງພື້ນຖານ ຂອງພາກພື້ນເປັນຕົ້ນ APG, TAGP, SKRL ແລະ ເຄືອຂ່າຍເສັ້ນທາງຫຼວງແຫ່ງຊາດອາຊຽນ; ແລະ
- ກຳຈັດ ຫຼື ຫຼຸດຜ່ອນສິ່ງກີດຂວາງຕໍ່ການລົງທຶນຂ້າມຊາດ/ການໃຊ້ຈ່າຍລົງທຶນເຂົ້າໃສ່ໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງພາກພື້ນ.

**ຂ.5. <u>ດ້ານອາກອນ</u>:**

**58. <u>ພາກການປະຕິບັດ:</u>**

- ສຳເລັດການສ້າງຕັ້ງລະບົບເຄືອຂ່າຍຂອງສັນຍາສອງຝ່າຍກ່ຽວກັບສັນຍາຫຼີກລ້ຽງການເກັບອາກອນຊໍ້າຊ້ອນ ຂອງປະເທດສະມາຊິກອາຊຽນ ທັງໝົດ ໃນປີ 2010, ອາດມີການຂະຫຍາຍໄລຍະເວລາ.

**ຂ.6. <u>ການຄ້າຜ່ານທາງອີເລັກໂຕຼນິກ</u>:**

**59.** ວາງນະໂຍບາຍ ແລະ ໂຄງລ່າງພື້ນຖານດ້ານກົດໝາຍ ສຳລັບການຄ້າຜ່ານທາງອີເລັກໂຕຼນິກ ແລະ ສາມາດຄ້າຂາຍສິນຄ້າຜ່ານລະບົບສາຍຕົງ ອອນລາຍ (E-commerce) ລະຫວ່າງອາຊຽນດ້ວຍກັນ, ໂດຍປະຕິບັດຕາມ ສັນຍາວ່າດ້ວຍ ອີອາຊຽນ ແລະ ອີງໃສ່ແຜນວຽກຕ່າງໆ ທີ່ໄດ້ຕົກລົງເຫັນດີນຳ ກັນ.

**<u>ພາກການປະຕິບັດ:</u>**

- ຮັບຮອງເອົາບົດຮຽນຕົວຈິງອັນດີໃນການຈັດຕັ້ງປະຕິບັດດ້ານນະໂຍບາຍ ການແຂ່ງຂັນໃນຂະແໜງໂທລະຄົມມະນາຄົມ ແລະ ການສະໜັບສະ ໜູນໃຫ້ກັບການກະກຽມອອກລະບຽບກົດໝາຍພາຍໃນ ກ່ຽວກັບການຄ້າຜ່ານລະບົບອີເລັກໂຕຼນິກ;

- ສ້າງຄວາມກົມກຽວໂຄງລ່າງພື້ນຖານດ້ານກົດໝາຍສໍາລັບຂໍ້ຜູກພັນທາງ ອີເລັກໂຕຼນິກ ແລະ ການແກ້ໄຂຂໍ້ພິພາດ;
- ພັດທະນາ ແລະ ຈັດຕັ້ງປະຕິບັດ ຂໍ້ແນະນໍາການປະຕິບັດທີ່ໄດ້ມາຈາກ ບົດຮຽນຕົວຈິງສໍາລັບຂໍ້ຜູກພັນດ້ານອີເລັກໂຕຼນິກ, ແນະນໍາຫຼັກການສໍາ ລັບການບໍລິການແກ້ໄຂຂໍ້ຂັດແຍ່ງທາງສາຍຕົງ ອອນລາຍ, ແລະ ແຜນ ຮັບຮູ້ຊຶ່ງກັນ ແລະ ກັນ ກ່ຽວກັບການລົງລາຍເຊັນຜ່ານລະບົບອີເລັກໂຕຼ ນິກໃນອາຊຽນ; ແລະ
- ອໍານວຍຄວາມສະດວກໃນການຮັບຮູ້ເຊິ່ງກັນ ແລະ ກັນກ່ຽວກັບການລົງ ລາຍເຊັນຜ່ານລະບົບອີເລັກໂຕຼນິກ ໃນອາຊຽນ;
- ສຶກສາ ແລະ ສົ່ງເສີມການຮັບຮອງເອົາບົດຮຽນຕົວຈິງທີ່ດີ ແລະ ບົດແນະ ນໍາ ດ້ານລະບຽບກົດໝາຍ ແລະ/ຫຼື ມາດຖານ ໂດຍອີງໃສ່ແຜນວຽກທີ່ໄດ້ ເຫັນດີນໍາກັນ; ແລະ
- ສ້າງຕັ້ງລະບົບເຄືອຂ່າຍເວທີຫາລື ລະຫວ່າງຫົວໜ່ວຍທຸລະກິດໃນອາ ຊຽນ ແລະ ຄູ່ເຈລະຈາອາຊຽນ ເພື່ອໃຊ້ ເປັນເວທີແຫ່ງການສົ່ງເສີມການ ຄ້າ ແລະ ການລົງທຶນ.

ຄ. **<u>ການພັດທະນາເສດຖະກິດທີ່ເປັນທໍາ</u>.**

ຄ.1. **<u>ການພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ</u>:**

**60.** ແຜນປະຕິບັດວຽກດ້ານນະໂຍບາຍອາຊຽນສໍາລັບການພັດທະນາວິສາຫະ ກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) 2004-2014 ໄດ້ການົດແຜນວຽກ ສໍາລັບການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນ ພາກພື້ນອາຊຽນ. ແຜນດັ່ງກ່າວປະກອບດ້ວຍ ແຜນດໍາເນີນງານທີ່ເປັນຍຸດທະສາດ, ມາດຕະການ, ນະໂຍບາຍ ແລະ ຜົນຂອງການດໍາເນີນງານ. ເປົ້າໝາຍ ແມ່ນເພື່ອ:

(ກ) ເລັ່ງລັດບາດກ້າວການພັດທະນາ SME, ການເບິ່ງໃນແງ່ດີ ໃນ ຄວາມແຕກຕ່າງຂອງປະເທດ ສະມາຊິກອາຊຽນ;

(ຂ) ເພີ່ມທະວີການແຂ່ງຂັນແລະຄວາມເຂັ້ມແຂງຂອງ SMEs ອາຊຽນ. ໂດຍການອຳນວຍຄວາມສະດວກໃຫ້ກັບພວກເຂົາ ເພື່ອເຂົ້າສູ່ແຫຼ່ງ ຂໍ້ມູນຂ່າວສານ, ຕະຫລາດ, ການພັດທະນາຊັບພະຍາກອນມະນຸດ ແລະ ທັກສະ, ການເງິນ ດ້ານເຕັກໂນໂລຊີ.

(ຄ) ສ້າງຄວາມເຂັ້ມແຂງເຮັດໃຫ້ SMEs ຂອງອາຊຽນກັບຄືນສູ່ລະບົບປົກ ກະຕິ ເພື່ອຕ້ານກັບເສດຖະກິດມະຫາພາກ ແລະ ຄວາມຫຍຸ້ງຍາກ ດ້ານການເງິນ, ລວມທັງສິ່ງທ້າທາຍຕ່າງໆ, ເນື່ອງຈາກສະພາບ ແວດລ້ອມດ້ານການຄ້າທີ່ນັບມື້ນັບເປີດກ້ວາງຂຶ້ນກວ່າເກົ່າ; ແລະ

(ງ) ເພີ່ມການປະກອບສ່ວນຂອງ SMEs ຕໍ່ການເຕີບໂຕຂອງເສດຖະກິດ ທັງໝົດ ແລະ ການພັດທະນາໃນຂົງເຂດອາຊຽນ.

**<u>ພາກການປະຕິບັດ:</u>**

- ຈັດຕັ້ງປະຕິບັດແຜນປະຕິບັດນະໂຍບາຍອາຊຽນ ໃນການພັດທະນາ SMEs 2004-2014
- ສົ່ງເສີມເຄືອຂ່າຍຂອງ SMEs ແລະ ການມີສ່ວນຮ່ວມຂອງພວກເຂົາ ເຈົ້າໃນການສ້າງເຄືອຂ່າຍການຜະລິດ ແລະ ການຈຳໜ່າຍໃນພາກ ພື້ນ; ແລະ
- ສົ່ງເສີມບົດຮຽນຕົວຈິງທີ່ດີທີ່ສຸດໃນການພັດທະນາ SMEs ລວມທັງ ສະໜັບສະໜູນດ້ານການເງິນໃຫ້ກັບ SME;

## ຄ.2. <u>ຂໍ້ລິເລີ່ມສຳລັບການເຊື່ອມໂຍງອາຊຽນ (IAI)</u> :

**61.** ຍ້ອນລະດັບຄວາມແຕກຕ່າງຂອງການພັດທະນາຂອງປະເທດສະມາຊິກ ອາຊຽນ, ຈຶ່ງຈຳເປັນຕ້ອງຮັບປະກັນຢ່າງເລິກເຊິ່ງ ແລະ ກວ້າງຂວາງ ໃນການ ເຊື່ອມໂຍງອາຊຽນ ແລະ ຕ້ອງມີການຮ່ວມມືພັດທະນາການ ແລະ ຮ່ວມມືດ້ານ ວິຊາການ ເພື່ອແກ້ໄຂຄວາມແຕກຕ່າງດ້ານການພັດທະນາ ແລະ ເລັ່ງລັດການ ເຊື່ອມໂຍງເສດຖະກິດຂອງບັນດາປະເທດສະມາຊິກອາຊຽນ ທີ່ມີການພັດທະ ນາໜ້ອຍ, ເພື່ອແບ່ງປັນ ແລະ ນຳໃຊ້ຜົນປະໂຫຍດຂອງການເຊື່ອມໂຍງເສດ

ຖະກິດອາຊຽນ ໃຫ້ກັບທັງໝົດ ບັນດາປະເທດສະມາຊິກອາຊຽນ. ສິ່ງນີ້ຈະໃຫ້ບັນດາປະເທດສະມາຊິກອາຊຽນກ້າວເຂົ້າສູ່ຄວາມເປັນອັນໜຶ່ງອັນດຽວກັນໄດ້.

**62.** ຂໍ້ລິເລີ່ມສາລັບການເຊື່ອມໂຍງອາຊຽນ (IAI) ຖືກປະກາດໃນເດືອນ 11 ປີ 2000, ໄດ້ການົດທິດທາງ ແລະ ມີຈຸດສຸມທີ່ຊັດເຈນກ່ຽວກັບຄວາມພະຍາຍາມໃນການຮັດແຄບຊ່ອງວ່າງການພັດທະນາ ບໍ່ພຽງແຕ່ຢູ່ພາຍໃນອາຊຽນເທົ່ານັ້ນ ແຕ່ລະຫວ່າງອາຊຽນ ແລະ ຫລາຍໆພາກສ່ວນຢູ່ໃນໂລກເຊັ່ນກັນ. ປະຈຸບັນແມ່ນກວມເອົາຂົງເຂດບູລິມະສິດຕ່າງໆເຊັ່ນ ໂຄງລ່າງພື້ນຖານ, ການພັດທະນາຊັບພະຍາກອນມະນຸດ, ເຕັກໂນໂລຊີດ້ານຂໍ້ມູນຂ່າວສານ ແລະ ການສື່ ສານ (ICT), ການສ້າງຄວາມອາດສາມາດສໍາລັບການເຊື່ອມໂຍງເສດຖະກິດ ໃນພາກພື້ນ, ດ້ານພະລັງງານ, ບັນຍາກາດດ້ານການລົງທຶນ, ດ້ານການທ່ອງ ທ່ຽວ, ດ້ານການຫລຸດຜ່ອນຄວາມທຸກຈົນ ແລະ ການປັບປຸງຄຸນນະພາບຊີວິດ.

**63.** ການປະເຊີນກັບສິ່ງທ້າທາຍຂອງປະຊາຄົມເສດຖະກິດອາຊຽນ AEC ຮຽກຮ້ອງໃຫ້ CLMV ຕ້ອງໄດ້ປັບປຸງນະໂຍບາຍເພື່ອເພີ່ມທະວີການເຕີບໂຕດ້ານເສດຖະກິດ, ສ້າງຄວາມເຂັ້ມແຂງດ້ານເສດຖະກິດ ທີ່ສາມາດແຂ່ງຂັນໄດ້, ເພີ່ມການລົງທຶນພາຍໃນ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ, ຂະຫຍາຍຂະແໜງວິສາຫະກິດເອກະຊົນ ເພື່ອບັນລຸກັບເປົ້າໝາຍຂອງປະເທດເຫຼົ່ານັ້ນ.

**<u>ພາກການປະຕິບັດ:</u>**

- ເພີ່ມທະວີເຮັດໃຫ້ຂໍ້ລິເລີ່ມສໍາລັບການເຊື່ອມໂຍງເສດຖະກິດອາຊຽນ ເປັນເວທີໃນການກໍານົດ ແລະ ການຈັດຕັ້ງປະຕິບັດການຊ່ວຍເຫລືອ ດ້ານເຕັກນິກ ແລະ ໂຄງການສ້າງຄວາມອາດສາມາດໃຫ້ກັບ ພາກລັດ ແລະ ເອກະຊົນໃນບັນດາປະເທດສະມາຊິກອາຊຽນ, ໂດຍສະເພາະ ແມ່ນ CLMV ແລະ ບັນດາໂຄງການອານຸພາກພື້ນຕ່າງໆ ເຊັ່ນວ່າ: IMT-GT ແລະ BIMP-EAGA ພາຍໃນອາຊຽນເພື່ອໃຫ້ເຂົາເຈົ້າເປັນຄູ່ຮ່ວມທີ່ເທົ່າທຽມກັນໃນການພັດທະນາເຄືອຂ່າຍການຜະລິດ ແລະ ການຈໍາໜ່າຍໃນພາກພື້ນ;
- ອາຊຽນເກົ່າ 6 ປະເທດ ຈະຕ້ອງສືບຕໍ່ສະໜັບສະໜູນໂຄງການ IAI.

- ລວບລວມເອົາການຊ່ວຍເຫຼືອຢ່າງພຽງພໍຈາກປະເທດຄູ່ເຈລະຈາ ແລະ ອົງການຈັດຕັ້ງສາກົນ ເຊັ່ນ: ທະນາຄານພັດທະນາອາຊີ, ທະນາຄານ ໂລກ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໂຄງການ IAI ມີປະສິດທິຜົນ.
- ສ້າງ/ເຮັດໃຫ້ຄວາມອາດສາມາດຂອງພະນັກງານລັດ ມີຄວາມເຂັ້ມ ແຂງ ເພື່ອພັດທະນາ/ປະຕິບັດນະໂຍບາຍເສດຖະກິດ ແລະ ສັງຄົມ ເພື່ອຫຼຸດຜ່ອນຜົນກະທົບຂອງການເຊື່ອມໂຍງດ້ານເສດຖະກິດ.
- ປະຕິບັດການສຶກສາຄົ້ນຄວ້າດ້ານເສດຖະກິດສັງຄົມໃນແຕ່ລະໄລຍະ ເພື່ອຕິດຕາມກວດກາ/ປະເມີນຜົນກະທົບ ຈາກການປະຕິບັດການ ເຊື່ອມໂຍງດ້ານເສດຖະກິດ.

## ງ. <u>ການເຊື່ອມໂຍງເຂົ້າກັບເສດຖະກິດໂລກ</u> :

**64.** ອາຊຽນດາເນີນງານຂອງຕົນໃນສະພາບແວດລ້ອມໂລກທີ່ເພີ່ມຂຶ້ນ, ກັບ ຕະຫລາດທີ່ເພິ່ງພາອາໄສຊຶ່ງ ກັນ ແລະ ກັນ ແລະ ອຸດສາຫາກຳໂລກາພິວັດ. ເພື່ອຈະເຮັດໃຫ້ທຸລະກິດອາຊຽນສາມາດແຂ່ງຂັນກັບສາກົນໄດ້, ສ້າງໃຫ້ອາ ຊຽນມີຄວາມວ່ອງໄວ ແລະ ເຂັ້ມແຂງຂຶ້ນ ໃນດ້ານການສະໜອງແບບຕ່ອງໂສ້ ໃນທົ່ວໂລກ ແລະ ເພື່ອຮັບປະກັນໃຫ້ຕະຫລາດພາຍໃນຍັງຄົງດຶງເອົາການລົງ ທຶນຈາກຕ່າງປະເທດໄດ້. ມັນເປັນສິ່ງສຳຄັນ ສຳລັບອາຊຽນ ທີ່ຈະຕ້ອງໄດ້ພິຈາ ລະນານອກເໜືອຂອບເຂດ ຂອງປະຊາຄົມເສດຖະກິດອາຊຽນ, ບັນດາຫລັກ ການ ແລະ ລະບຽບການພາຍນອກ ຈະຕ້ອງໄດ້ຮັບການພິຈາລະນາຕື່ມອີກ ໃນເວລາປັບປຸງນະໂຍບາຍຕ່າງໆ ທີ່ຕິດພັນກັບປະຊາຄົມເສດຖະ ກິດອາຊຽນ.

### ງ.1. <u>ຮູບການອັນເໝາະສົມແນໃສ່ການພົວພັນດ້ານເສດຖະກິດກັບພາຍນອກ</u>:

**65.** ອາຊຽນຈະສືບຕໍ່ເຮັດວຽກໂດຍແນໃສ່ເພື່ອຮັກສາໄວ້ຊຶ່ງ **“**ຄວາມເປັນແກນ ກາງຂອງອາຊຽນ**”** ໃນການພົວພັນເສດຖະກິດກັບພາຍນອກ, ລວມເຖິງ, ແຕ່ບໍ່ໄດ້ຈຳກັດການເຈລະຈາເຂດການຄ້າເສລີ (FTA) ແລະ ສັນຍາການເປັນຄູ່ຮ່ວມທາງເສດຖະກິດຮອບດ້ານ (CEPs). ສິ່ງນີ້ຈະຕ້ອງໄດ້ຖືກປະຕິບັດໂດຍ:

**<u>ພາກການປະຕິບັດ:</u>**

- ທົບທວນຄືນຂໍ້ຜູກພັນຂອງ FTA/CEP, ຕໍ່ກັບການປະຕິບັດຂໍ້ຜູກພັນ ການເຊື່ອມໂຍງພາຍໃນຂອງອາຊຽນ; ແລະ

- ສ້າງລະບົບການປະສານງານທີ່ເຂັ້ມແຂງ ແລະ ການກ້າວເຖິງຄວາມເປັນໄປໄດ້ທີ່ຈະມີຮູບການອັນດຽວກັນ ແລະ/ຫລື ກໍານົດທ່າທີອັນດຽວກັນໃນການພົວພັນເສດຖະກິດກັບພາຍນອກຂອງອາຊຽນ ແລະ ໃນເວທີພາກພື້ນ ແລະ ເວທີຫລາຍຝ່າຍ.

## ງ.2. <u>ເພີ່ມທະວີ ການມີສ່ວນຮ່ວມໃນເຄືອຂ່າຍການສະໜອງຂອງໂລກ</u>:

**66.** ອາຊຽນຈະຕ້ອງເພີ່ມທະວີການມີສ່ວນຮ່ວມໃນເຄືອຂ່າຍການສະໜອງຂອງໂລກເຊັ່ນກັນ ໂດຍ:

**<u>ພາກການປະຕິບັດ</u>**

- ສືບຕໍ່ການນໍາໃຊ້ບົດຮຽນຕົວຈິງທີ່ດີທີ່ສຸດຂອງສາກົນ ແລະ ມາດຖານໃນການຜະລິດ ແລະ ການຈັດຈໍາໜ່າຍ, ຖ້າເຫັນວ່າມີຄວາມເປັນໄປໄດ້.
- ສ້າງຂະບວນການຊ່ວຍເຫລືອທາງດ້ານເຕັກນິກວິຊາການໃຫ້ແກ່ປະເທດສະມາຊິກອາຊຽນ ທີ່ມີການພັດທະນາໜ້ອຍ, ເພື່ອຍົກລະດັບຄວາມສາມາດທາງດ້ານອຸດສາຫະກໍາ ແລະ ຜະລິດຕະພາບຂອງ ພວກເຂົາ, ເພື່ອເພີ່ມ ທະວີການມີສ່ວນຮ່ວມຂອງພວກເຂົາເຂົ້າໃນ ພາກພື້ນ ແລະ ຂໍ້ລິເລີ່ມເຊື່ອມໂຍງຂອງໂລກ.

# III. <u>ການຈັດຕັ້ງປະຕິບັດ</u>:

**67.** ຕາຕະລາງແຜນຍຸດທະສາດທີ່ລວມເອົາປັດໄຈສໍາຄັນສໍາລັບການເຊື່ອມໂຍງເສດຖະກິດຢ່າງເລິກເຊິ່ງ ແລະ ຮອບດ້ານ ຈະເປັນສ່ວນໜຶ່ງທີ່ສໍາຄັນຂອງແຜນງານນີ້. ໄດ້ມີການປຶກສາຫາລືກັບອົງການຕ່າງໆທີ່ກ່ຽວຂ້ອງ/ຜູ້ມີສ່ວນ ຮ່ວມ ເພື່ອປະກອບສ່ວນດ້ານຄໍາຄິດເຫັນ ແລະ ໄດ້ຈັດກອງປະຊຸມປະສານ ງານຂຶ້ນຮ່ວມກັນ ເພື່ອທົບທວນຄືນແຜນງານ ແລະ ຕາຕະລາງແຜນຍຸດທະ ສາດ ກັບຜູ້ກ່ຽວຂ້ອງທັງໝົດ ເພື່ອຮັບປະກັນຄວາມສອດຄ່ອງຂອງມາດຕະ ການ, ແຜນການ ແລະ ຂະແໜງການ

ສຳຄັນທີ່ໄດ້ກ່າວມາຂ້າງເທິງນັ້ນ ແລະ ສົ່ງເສີມໃຫ້ເກີດຈິດສຳນຶກຄວາມ\ເປັນເຈົ້າຂອງ ຕໍ່ແຜນງານ.

**68.** ບັນດາຂະແໜງການຂອງອາຊຽນ ທີ່ມີສ່ວນກ່ຽວຂ້ອງ ຈະປະສານງານໃນການຈັດຕັ້ງປະຕິບັດແຜນການ ແລະ ມາດຕະການທີ່ກ່າວມານັ້ນ ຊຶ່ງໜ່ວຍງານພາກລັດທີ່ກ່ຽວຂ້ອງ ຈະຮັບຜິດຊອບໃນການຕິດຕາມກວດກາການຈັດຕັ້ງປະຕິບັດ ແລະ ການກະກຽມລາຍລະອຽດແຜນປະຕິບັດງານລະດັບຊາດ. ມີສ່ວນຮ່ວມໃນການກະກຽມຕ່າງໆນຳຂະແໜງການເອກະຊົນ, ສະມາຄົມອຸດສະຫະກຳອື່ນໆທີ່ກ່ຽວຂ້ອງ ໃນພາກພື້ນ ແລະ ລະດັບຊາດ ຈະໄດ້ຊອກຫາເຂດທີ່ມີຄວາມຕ້ອງການເພື່ອຮັບປະກັນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນໃນຂັ້ນຕອນດຳເນີນການເຊື່ອມໂຍງດັ່ງກ່າວ.

**69**. ເພື່ອຜົນສຳເລັດໃນການປະຕິບັດແຜນການ ແລະ ມາດຕະການເຫຼົ່ານີ້, ຈຳເປັນຕ້ອງມີກົນໄກ ຫຼືໜ່ວຍງານ, ຊັບພະຍາກອນ, ຄວາມສາມາດ ແລະ ດ້ານການເມືອງ ໃຫ້ສອດຄ່ອງແທດເໝາະກັບຂະບວນການກໍ່ສ້າງປະຊາຄົມ.

**ກ. <u>ກົນໄກການຈັດຕັ້ງປະຕິບັດ:</u>**

**70.** ບັນດາກະຊວງຂະແໜງການທີ່ກ່ຽວຂ້ອງຈະຕ້ອງຮັບຜິດຊອບຕໍ່ການຈັດຕັ້ງປະຕິບັດແຜນງານ ແລະ ຕິດຕາມກວດກາບັນດາຂໍ້ຜູກພັນພາຍໃຕ້ຄວາມຮັບຜິດຊອບຂອງຕົນ. ລັດຖະມົນຕີເສດຖະກິດອາຊຽນ (AEM) ທີ່ເປັນລັດຖະມົນຕີຮັບຜິດຊອບວຽກງານການເຊື່ອມໂຍງດ້ານເສດຖະກິດ ໃນສະພາປະຊາຄົມເສດຖະກິດອາຊຽນນັ້ນ, ຈະເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນສ້າງປະຊາຄົມເສດຖະກິດອາຊຽນທັງໝົດ.

**71.** ເພື່ອໃຫ້ການຈັດຕັ້ງປະຕິບັດແຜນສ້າງປະຊາຄົມເສດຖະກິດອາຊຽນ ດຳເນີນຢ່າງມີປະສິດທິຜົນນັ້ນ, ຈະຕ້ອງໄດ້ປະຕິບັດບັນດາມາດຕະການໃນການກຳນົດທິດທາງຍຸດທະສາດ ແລະ ການປະສານງານດັ່ງຕໍ່ໄປນີ້ :

**<u>ພາກການປະຕິບັດ:</u>**

- ຄະນະສະເພາະກິດລະດັບສູງເພື່ອການເຊື່ອມໂຍງດ້ານເສດຖະກິດ ອາຊຽນ (HLTF) ຈະຕ້ອງນໍາສະເໜີຄໍາຄິດເຫັນ ແບບຍຸດທະສາດ ໃຫ້ລັດຖະມົນຕີເສດຖະກິດອາຊຽນໃນປະເດັນທີ່ພົວພັນເຖິງຜົນກະທົບດ້ານໄລຍະເວລາ ຕໍ່ການຈັດຕັ້ງປະຕິບັດແຜນສ້າງປະຊາຄົມເສດຖະກິດອາຊຽນ.
- ປຶກສາຫາລືກັບຫລາຍຂະແໜງການຢ່າງເປັນປົກກະຕິເພື່ອປຶກສາ ແລະ ເກັບກໍາຂໍ້ມູນກ່ຽວກັບປະເດັນການຈັດຕັ້ງປະຕິບັດແຜນສ້າງປະຊາຄົມເສດຖະກິດອາຊຽນ.
- ເລຂາທິການໃຫ່ຍອາຊຽນຈະຕ້ອງລາຍງານຄວາມຄືບໜ້າຂອງການປະຕິບັດການສ້າງປະຊາຄົມເສດຖະກິດອາຊຽນຕໍ່ກອງປະຊຸມບັນດາລັດຖະມົນຕີ ທີ່ກ່ຽວຂ້ອງ ແລະ ກອງປະຊຸມສຸດຍອດອາຊຽນ.

**72.** ໃນການເພີ່ມທະວີຂະບວນການຈັດຕັ້ງປະຕິບັດ ແລະ ໃຫ້ຂະບວນການຕົກລົງໃນທຸກຂໍ້ລິເລີ່ມຂອງຂະແໜງການທັງໝົດພາກເສດຖະກິດອາຊຽນ ທີ່ກໍາ ນົດໃນ Blueprint ແລະ ນອກເໜືອຂອບເຂດນັ້ນ, ບັນດາມາດຕະການດັ່ງ ຕໍ່ໄປນີ້ ຈະຕ້ອງໄດ້ຖືກສະເໜີແນະ:

- ສົ່ງເສີມຄວາມໂປ່ງໃສ ແລະ ປັບປຸງການປະຕິບັດຂັ້ນຕອນການປະກາດແຈ້ງການພາຍໃຕ້ຂໍ້ຕົກລົງທັງໝົດດ້ານເສດຖະກິດອາຊຽນ ໂດຍຜ່ານອະນຸສັນຍາວ່າດ້ວຍຂັ້ນຕອນການປະກາດແຈ້ງການ.
- ການໃຫ້ສັດຕະຍາບັນດ້ານກົດໝາຍອາຊຽນ ຈະຕ້ອງໃຫ້ສໍາເລັດ ພາຍ ໃນ 6 ເດືອນນັບແຕ່ມື້ລົງນາມ.
- ຂັ້ນຕອນການຕັດສິນໂດຍໜ່ວຍງານເສດຖະກິດ ຈະຕ້ອງເປັນແບບເອກະສັນກັນ ແລະ ໃນເມື່ອບໍ່ມີຄວາມເປັນເອກະສັນກັນ, ອາຊຽນຈະຕ້ອງໄດ້ພິຈາລະນາດ້ວຍຮູບການອື່ນໆ ໂດຍຈຸດປະສົງ ເພື່ອໃຫ້ຂັ້ນຕອນການຕັດສິນວ່ອງໄວ.
- ນໍາໃຊ້ກົນໄກການແກ້ໄຂຂໍ້ຂັດແຍ່ງ ເພື່ອສົ່ງເສີມໃຫ້ປະຊາຄົມປະຕິບັດບົນພື້ນຖານລະບຽບ ຫຼັກການ.

- ສູດອາຊຽນລິບ X ສາມາດນຳມາໃຊ້ ເພື່ອເລັ່ງລັດການຈັດຕັ້ງປະຕິບັດບັນດາຂໍ້ລິເລີ່ມທາງເສດຖະກິດ ທີ່ໄດ້ຕົກລົງກັນແລ້ວ; ແລະ
- ຄວນມີການໂຍະຍານໃນການຈັດຕັ້ງປະຕິບັດການສ້າງປະຊາຄົມເສດຖະກິດອາຊຽນ. ທີ່ໄດ້ເຫັນດີກັນລ່ວງໜ້າ ແລະ ບໍ່ແກ່ຍາວເວລາຄວາມຄືບໜ້າໂດຍລວມ ໃນການຈັດຕັ້ງປະຕິບັດການສ້າງປະຊາຄົມເສດຖະກິດອາຊຽນ.

**73.** ຄວາມຄືບໜ້າໃນການຈັດຕັ້ງປະຕິບັດບັນດາແຜນໂຄງການຂ້າງເທິງ ແລະ ມາດຕະການສຳລັບ ການສ້າງປະຊາຄົມເສດຖະກິດອາຊຽນ ໂດຍປະເທດສະມາຊິກນັ້ນ ຈະຕ້ອງໄດ້ມີການຕິດຕາມກວດກາ, ທົບທວນຄືນ ແລະ ເຜີຍແຜ່ໃຫ້ຜູ້ທີ່ມີສ່ວນຮ່ວມທັງໝົດໄດ້ຮັບຮູ້. ກອງເລຂາອາຊຽນຈະຕ້ອງທົບທວນຄືນ ແລະ ຕິດຕາມກວດກາຄວາມຖືກຕ້ອງໃນການຈັດຕັ້ງປະຕິບັດແຜນສ້າງປະຊາຄົມເສດຖະກິດອາຊຽນ.

**<u>ພາກການປະຕິບັດ:</u>**

- ພັດທະນາ ແລະ ສ້າງຖານຕົວຊີ້ບອກທາງດ້ານສະຖິຕິ, ລວມທັງການເຊື່ອມໂຍງລະບົບຖານຂໍ້ມູນອັດຕາພາສີ ແລະ ຕົວເລກການຄ້າ, ສ້າງຖານສະຖິຕິ ໃຫ້ມີຄວາມກົມກຽວກັນ ແລະ ປະເດັນຄຸນນະພາບຂໍ້ມູນຂ່າວສານ, ແລະ ການບັນທຶກຄວາມຄືບໜ້າຂອງການສ້າງປະ ຊາຄົມເສດຖະກິດອາຊຽນ, ເພື່ອຕິດຕາມກວດກາ ແລະ ປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໃນແຕ່ລະອົງປະກອບ ຂອງ ການສ້າງປະຊາຄົມເສດຖະກິດອາຊຽນ.

**74.** ສາລັບຂະແໜງການເງິນ

- ສ້າງກົນໄກການປະຕິບັດງານທີ່ເໝາະສົມໃນຮູບແບບລາຍງານ ຄວາມຄືບໜ້າຢ່າງເປັນປົກກະຕິ ໃຫ້ແກ່ຜູ້ນຳ.

**ຂ. <u>ແຫລ່ງຕ່າງໆ:</u>**

**75.** ການສະໜັບສະໜູນໃຫ້ແກ່ການຄົ້ນຄວ້າ ແລະ ການສ້າງຄວາມອາດສາ ມາດແມ່ນຕ້ອງໄດ້ລະດົມຂົນຂວາຍມາຈາກຫລາຍແຫຼ່ງ.

__ພາກການປະຕິບັດ:__

- ກອງທຶນພັດທະນາອາຊຽນ, ໂດຍການປະກອບສ່ວນຈາກປະເທດສະມາຊິກ, ຈະເປັນເຄື່ອງມືໜຶ່ງເພື່ອດຶງເອົາທຶນທັງຈາກອາຊຽນ ແລະ ທີ່ບໍ່ແມ່ນອາຊຽນ.
- ກຳນົດ ແລະ ດຳເນີນການສຶກສາຄົ້ນຄວ້າດ້ານວິຊາການ ຫລື ໂຄງການຝຶກອົບຮົມ, ກ່ຽວກັບການວິເຄາະປະເດັນ, ຂະແໜງ ຫຼື ຫົວຂໍ້ຕ່າງໆ ລວມທັງການສະໜັບສະໜູນໃນການສ້າງຄວາມສາມອາດສາມາດ ແມ່ນມີຄວາມຈຳເປັນ ເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດແຜນປະຕິບັດງານ ເພື່ອສ້າງປະຊາຄົມເສດຖະກິດອາຊຽນ.
- ຫັນເອົາບັນດາເປົ້າໝາຍພື້ນຖານຂອງແຜນປະຕິບັດງານເພື່ອສ້າງປະ ຊາຄົມເສດຖະກິດອາຊຽນເຂົ້າເປັນເປົ້າໝາຍພື້ນຖານແຫ່ງຊາດ ແລະ ເປົ້າໝາຍແຫ່ງຊາດ ແລະ ລວມເຂົ້າໃນແຜນພັດທະນາແຫ່ງ ຊາດ.
- ຊຸກຍູ້ສົ່ງເສີມການມີສ່ວນຮ່ວມຂອງ ADB, WB/IFC, ປະເທດທີ່ເປັນຄູ່ພາຄີ ຫລື ຄູ່ການຄ້າ ແລະ ພາກເອກະຊົນ ເຂົ້າໃນການພັດທະນາໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງພາກພື້ນ.
- ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດໃນການຄົ້ນຄວ້າ ແລະ ການວາງແຜນໃຫ້ແກ່ກອງເລຂາອາຊຽນ ໃນຂະແໜງທີ່ກ່ຽວພັນກັບ ການສ້າງປະຊາຄົມເສດຖະກິດອາຊຽນ, ແລະ
- ສ້າງໃຫ້ຄວາມອາດສາມາດດ້ານການຄົ້ນຄວ້າ ແລະ ພັດທະນາບຸກຄະລາກອນຂອງແຕ່ລະປະເທດສະມາຊິກອາຊຽນມີຄວາມເຂັ້ມແຂງ; ແລະ
- ສ້າງໂຄງການພັດທະນາຄວາມອາດສາມາດທີ່ເໝາະສົມ ເພື່ອຊ່ວຍ ເຫລືອປະເທດສະມາຊິກໃໝ່, ເພື່ອເພີ່ມທະວີການພັດທະນາ ແລະ ບັນດາໂຄງສ້າງຂອງຕະຫລາດການເງິນຂອງພວກເຂົາ.

**ຄ. __ການສື່ສານ:__**

**76.** ຜົນສຳເລັດຂອງການສ້າງປະຊາຄົມເສດຖະກິດອາຊຽນແມ່ນຮຽກຮ້ອງການມີສ່ວນຮ່ວມຂອງທຸກພາກສ່ວນ ໃນຂະບວນການປະຕິບັດການເຊື່ອມ ໂຍງ. ນອກຈາກການມີສ່ວນຮ່ວມຈາກທຸກພາກສ່ວນໃນການກຳນົດແຜນງານ ແລ້ວ, ຈຳເປັນຕ້ອງມີແຜນການການສື່ສານທີ່ດີ ເພື່ອສ້າງຈິດສຳນຶກກ່ຽວການສ້າງປະຊາຄົມເສດຖະກິດອາຊຽນໃນບັນດາປະເທດອາຊຽນ ທັງໝົດ ເພື່ອໃຫ້ຜູ້ມີສ່ວນຮ່ວມທັງໝົດ ລວມທັງນັກທຸລະກິດ ແລະ ປະຊາຊົນອາຊຽນ ໄດ້ຮັບຊາບເຖິງຄວາມຄືບໜ້າຂອງການສ້າງປະຊາຄົມນີ້.

<u>**ພາກການປະຕິບັດ:**</u>

- ປະກາດໃຫ້ທົ່ວສັງຄົມຮັບຊາບຢ່າງກວ້າງຂວາງເພື່ອອະທິບາຍ ໃຫ້ແກ່ເຈົ້າໜ້າທີ່ພາກລັດຖະບານ, ຜູ້ມີສ່ວນຮ່ວມທີ່ສຳຄັນ ແລະ ສາມັນຊົນທົ່ວໄປ ໄດ້ຮັບຊາບກ່ຽວກັບວັດຖຸປະສົງລວມ, ຜົນປະໂຫຍດ ແລະ ສິ່ງທ້າທາຍ ຂອງການສ້າງປະຊາຄົມເສດຖະກິດອາຊຽນ;
- ສ້າງເວທີພາກພື້ນເພື່ອເປີດການສົນທະນາ ແລະ ການແລກປ່ຽນຂໍ້ມູນຂ່າວສານ ໃນການຈັດຕັ້ງປະຕິບັດການສ້າງປະຊາຄົມເສດຖະກິດອາຊຽນ;
- ບັນດາປະເທດສະມາຊິກຈະຕ້ອງໄດ້ສ້າງກົນໄກລະດັບຊາດເພື່ອລາຍ ງານຜົນ ແລະ ປະເດັນຕ່າງໆຢ່າງເປັນປົກກະຕິກ່ຽວກັບຂັ້ນຕອນການ ເຊື່ອມໂຍງ; ແລະ
- ສ້າງເວບໄຊການສື່ສານ ສຳລັບການສ້າງປະຊາຄົມເສດຖະກິດອາ ຊຽນທີ່ຈະເປັນອີກຊ່ອງທາງອັນໜຶ່ງ ເພື່ອກ້າວໄປເຖິງປະຊາຄົມໄດ້ ຢ່າງສົມບູນ, ເພື່ອໃຫ້ຜູ້ມີສ່ວນຮ່ວມສາມາດໃຫ້ຄຳຄິດຄຳເຫັນກັບ ແລະ ຮັບຄຳຕອບກ່ຽວກັບ ຂໍ້ລິເລີ່ມດ້ານເສດຖະກິດຕ່າງໆຂອງອາ ຊຽນ.

## ງ. <u>ການທົບທວນຄືນ:</u>

**77.** ແຜນສ້າງປະຊາຄົມເສດຖະກິດອາຊຽນຈະຕ້ອງໄດ້ຖືກທົບທວນຄືນເປັນແຕ່ລະໄລຍະບົນພື້ນຖານສະພາບການປ່ຽນແປງດ້ານການພັດທະນາຂອງ ພາກພື້ນ ແລະ ຂອງໂລກ.